ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

31 ມີນາ
06 ເມສາ
2023
ປີທີ 12
ສະບັບທີ 916
ລາຍສັປະດາ

## ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ປະຈຳເດືອນມີນາ 2023



(ສພຊ) ເພື່ອພິຈາລະນາ ແລະ ຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ຄະນະປະຈຳສະພາແຫ່ງຊາດ ຕາມທີ່ໄດ້ກຳນົດໄວ້ໃນ ລັດຖະທຳມະນູນ, ກົດໝາຍ ໃຫ້ມີປະສິດທິຜົນ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໄດ້ຈັດຂຶ້ນໃນວັນທີ 27 ມີນາ 2023 ທີ່ຫ້ອງປະຊຸມຄະນະປະຈຳສະພາແຫ່ງຊາດ ໂດຍການເປັນປະທານຂອງທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານຄະນະປະຈຳສະພາແຫ່ງຊາດ, ເຂົ້າຮ່ວມມີບັນດາທ່ານ ຮອງປະທານຄະນະປະຈຳສະພາແຫ່ງຊາດ, ບັນດາທ່ານຄະນະປະຈຳສະພາແຫ່ງຊາດ ພ້ອມດ້ວຍພາກສ່ວນກ່ຽວຂ້ອງ.

ໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ວັນທີ 27 ມີນາ 2023 ໄດ້ຮັບຟັງການລາຍງານຂອງຄະນະເລຂາທິການສະພາແຫ່ງຊາດ ກ່ຽວກັບແຜນການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີIX; ການພິຈາລະນາແກ້ໄຂຄຳສະເໜີຂອງປະຊາຊົນ ຜ່ານໂທລະສັບສາຍດ່ວນ ທີ່ສົ່ງເຖິງກອງປະຊຸມສະໄໝສາມັນເທື່ອທີ 3, 4 ຂອງສະພາແຫຊາດ ຊຸດທີ IX; ການຈັດຕັ້ງປະຕິບັດໂຄງການກໍ່ສ້າງຕຶກສະພາປະຊາຊົນຂັ້ນແຂວງ ຈຳນວນ 5

ອ່ານໜ້າ 4

## ກອງປະຊຸມໃຫຍ່ຜູ້ພິພາກສາທົ່ວປະເທດ ຄັ້ງທີ XI



ອ່ານຕໍ່ໜ້າ 2

## ປະທານສະພາແຫ່ງຊາດ ເຄື່ອນໄຫວຢ້ຽມຢາມ ບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ

(ສພຊ) ໃນວັນທີ 24 ມີນາຜ່ານມາ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ພ້ອມດ້ວຍທ່ານ ກອງແກ້ວ ໄຊສົງຄາມ ເຈົ້າແຂວງບໍລິຄຳໄຊ, ທ່ານ ສຸວັນນີ ໄຊຊະນະ ປະທານສະພາປະຊາຊົນແຂວງບໍລິຄຳໄຊ ໄດ້ເຄື່ອນໄຫວຢ້ຽມຢາມບໍລິສັດ ໄຟຟ້ານ້ຳເທີນ 1

ອ່ານຕໍ່ໜ້າ 4



## ຄະນະກວດກາພັກ-ລັດ ສະພາແຫ່ງຊາດ ສະຫຼຸບວຽກງານປະຈຳປີ 2022



(ສພຊ) ເພື່ອເປັນການສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາ ປະຈຳປີ 2022 ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດ; ເຜີຍແຜ່ຜົນສຳເລັດກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2022 ແລະ ປາຖະກະຖາວັນສ້າງຕັ້ງອົງການກວດກາພັກ-ລັດ ຄົບຮອບ 41 ປີ (16/02/1982-16/02/2023) ທີ່ສະພາແຫ່ງຊາດ ຄະນະກວດກາພັກ-ລັດ ສະພາແຫ່ງຊາດ ໄດ້ຈັດກອງປະຊຸມສະຫຼຸບຕີລາຄາການເຄື່ອນໄຫວວຽກງານກວດກາ ປະຈຳປີ 2022 ໂດຍການເປັນປະທານຂອງສະຫາຍຄຳໃບ ດຳລັດ ກຳມະການສູນກາງພັກ, ປະທານກວດກາພັກ-ລັດ ສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ; ໂດຍ

ອ່ານຕໍ່ໜ້າ 4

## ຊີວິດ ແລະ ການເຄື່ອນໄຫວທີ່ບໍ່ຍອມ ເປັນອະດີດຂອງທ່ານ ກີນີມ ພົນເສນາ (14/7/1911-1/4/1963)

**ໂດຍ: ວິເສດ ສະແຫວງສຶກສາ**

ຂ່າວການຄາຕະກຳທີ່ຫ້ຽມໂຫດແບບເລືອດເຢັນໃນຄ່ຳຄືນວັນທີ 1 ເມສາ 1963 ທີ່ພາກຊີວິດທ່ານ ກີນີມ ພົນເສນາ ນັ້ນ ໄດ້ລອດໄປຮອດບ້ານນອກຂອກນາ ຖິ່ນກຳເນີດຂອງຜູ້ຂຽນອ່າວຊ້າແດ່ ເພາະລະບົບສື່ໄລຍະນັ້ນ ຍັງຢູ່ໃນຍຸກ "ເຕົ່າຄານ". ແຕ່ຂ່າວນີ້ມັນກໍພັດມີອິດທິພົນເອີ້ນໃຫ້ລຸກປຸກໃຫ້ຕື່ນ ຄືນໃນທຸກຄົວເຮືອນ. ຜູ້ຂຽນເອງໃນເວລາຍັງບໍ່ທັນຮູ້

ອ່ານໜ້າ 3

## ສສຊ ແລະ ສສຂ ພົບປະຜູ້ມີສິດເລືອກຕັ້ງ



(ສພຊ) ໃນລະຫວ່າງວັນທີ 13-17 ມີນາ 2023, ນຳໂດຍທ່ານ ສຈ. ປອ. ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ພ້ອມດ້ວຍຄະນະສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເມືອງໂພນໂຮງ ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ເພື່ອເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອ

ອ່ານຕໍ່ໜ້າ 4

### ພົບປະຜູ້ມີສິດເລືອກຕັ້ງ...



ອ່ານຕໍ່ໜ້າ 5

### ສຳມະນາຮ່າງ ບົດລາຍງານການເມືອງ...



ອ່ານຕໍ່ໜ້າ 6

### ບາງຜົນງານ...



ອ່ານຕໍ່ໜ້າ 7

# ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຢູ່ແຂວງຫົວພັນ

(ສພຊ) ເພື່ອແນ່ໃສ່ຮັບປະກັນໃຫ້ຖັນແຖວພະນັກງານ, ສະມາຊິກພັກ, ລັດຖະກອນ, ທະຫານ, ຕຳຫຼວດ, ກຳມະກອນ, ນັກຮຽນຮູ້, ປັນຍາຊົນ ແລະ ປະຊາຊົນບັນດາເຜົ່າຮັບຮູ້ ແລະ ເຊື່ອມຊຶມຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ແລະ ເຂົ້າຮ່ວມຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ; ໃນລະຫວ່າງວັນທີ 13-16 ມີນາຜ່ານມາ, ທ່ານ ຄຳແພງ ວິລະພັນ ປະທານກຳມາທິການຍຸຕິທຳ ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວພົບປະ ແລະ ເຜີຍແຜ່ຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ຢູ່ເມືອງຫົວເມືອງ, ເມືອງຮ້ຽມ ແລະ ເມືອງຊ່ອນ ລວມມີ 6 ຈຸດຄື: ບ້ານນ້ຳປ້ອງ, ບ້ານໂຄ້ງ, ບ້ານໂງ່ນ ແລະ 3 ຈຸດ ຂອງເທສະບານເມືອງ, ມີບັນດາທ່ານການນຳເມືອງ, ພະນັກງານ-ລັດຖະກອນ ແລະ ປະຊາຊົນບັນດາເຜົ່າເຂົ້າຮ່ວມທັງໝົດ 516 ຄົນ, ຍິງ 224 ຄົນ.



ທັງນີ້, ເພື່ອນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ຈັດຕັ້ງເຜີຍແຜ່ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແລະ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2022 ແລະ ແຜນການ ປະຈຳປີ 2023 ແລະ ບັນດາເນື້ອໃນຕ່າງໆຂອງກອງປະຊຸມ; ພ້ອມທັງຮັບຟັງການລາຍງານກ່ຽວກັບສະພາບລວມ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງເມືອງ ແລະ ບ້ານ.

ໃນໂອກາດນີ້, ທ່ານ ຄຳແພງ ວິລະພັນ ຍັງໄດ້ມີຄຳເຫັນ ແລະ ຮຽກຮ້ອງໃຫ້ການນຳເມືອງ, ບ້ານ ສົ່ງເສີມພໍ່ແມ່ປະຊາຊົນ ໃນການສ້າງສີມືແຮງງານທີ່ມີຢູ່ແລ້ວໃຫ້ດີຂຶ້ນກວ່າເກົ່າ ແລະ ຊຸກຍູ້ສ້າງເສດຖະກິດຄອບຄົວດ້ວຍການປູກຝັງ-ລ້ຽງສັດ ໃຫ້ກາຍເປັນສິນຄ້າສົ່ງອອກ ເພື່ອສ້າງລາຍຮັບເພີ່ມເຂົ້າສູ່ຄອບຄົວ, ແກ້ໄຂຊີວິດການເປັນຢູ່ນັບມື້ດີຂຶ້ນ, ເປັນເຈົ້າການສຶກສາອົບຮົມລູກຫຼານບໍ່ໃຫ້ຫຍຸ້ງກ່ຽວກັບບັນຫາຢາເສບຕິດ ແລະ ສິ່ງຫຍໍ້ທໍ້ຕ່າງໆ, ປະກອບສ່ວນສ້າງບ້ານພັດທະນາ, ບ້ານປອດຄະດີ, ບ້ານປອດຢາເສບຕິດ ແນໃສ່ເຮັດໃຫ້ການຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດມີປະສິດທິຜົນ. ຄຽງຄູ່ກັນນີ້ທ່ານ, ຍັງໄດ້ນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ເຜີຍແຜ່ນຳອີກ; ພ້ອມທັງໄດ້ເປີດໂອກາດໃຫ້ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນ ທີ່ມີຄວາມສົນໃຈຕໍ່ເນື້ອໃນກອງປະຊຸມ ແລະ ສະເໜີໃຫ້ຂັ້ນເທິງແກ້ໄຂບາງບັນຫາທີ່ມີຄວາມຫຍຸ້ງຍາກ, ຊັກຊ້າ ເຊັ່ນ: ການກໍ່ສ້າງສ້ອມແປງເສັ້ນທາງ, ການປະຕິບັດນະໂຍບາຍຕໍ່ຜູ້ທີ່ມີຄຸນງາມຄວາມດີຕໍ່ປະເທດຊາດ, ການສ້າງຕາຂ່າຍສັນຍານໂທລະສັບ ແລະ ອື່ນໆ.

ພ້ອມນັ້ນ, ຄະນະ ຍັງໄດ້ມອບອຸປະກອນການຮຽນ ແລະ ອຸປະກອນຫຼິ້ນກິລາຈຳນວນໜຶ່ງ ລວມມູນຄ່າ 10 ລ້ານກວ່າກີບ ໃຫ້ໂຮງຮຽນ ແລະ ນ້ອງນ້ອຍນັກຮຽນ.

(ນັກຂ່າວ ສພຂ ຫົວພັນ)

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

(ສພຊ) ໃນຕອນບ່າຍວັນທີ 29 ມີນາ 2023 ທ່ານ ປອ. ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ເຂົ້າຮ່ວມ ແລະ ມີຄຳເຫັນໂອ້ລົມ ຕໍ່ກອງປະຊຸມໃຫຍ່ ຜູ້ພິພາກສາທົ່ວປະເທດ ຄັ້ງທີ XI ຢູ່ທີ່ສູນການຮ່ວມມືສາກົນ ແລະ ການຝຶກອົບຮົມ (ICTC) ນະຄອນຫຼວງວຽງຈັນ, ຈັດໂດຍສານປະຊາຊົນສູງສຸດ ພາຍໃຕ້ຫົວຂໍ້: “ຍົກສູງຄວາມຮັບຜິດຊອບ ໃນການໂຕ້ແຍ່ງ-ໂຕ້ຖຽງ ໃຫ້ລະອຽດ, ຄົບຖ້ວນ ຮັບປະກັນໃຫ້ການຕັດສິນ, ພິພາກສາຄະດີຖືກຕ້ອງ ແລະ ຍຸຕິທຳ” ໂດຍການເປັນປະທານຂອງທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ເລຂາທິການສູນກາງພັກ, ປະທານສານປະຊາຊົນສູງສຸດ, ມີບັນດາຮອງປະທານສານປະຊາຊົນສູງສຸດ, ຜູ້ພິພາກສາຂອງສານປະຊາຊົນສູງສຸດ, ຜູ້ພິພາກສາອາວຸໂສ, ຄະນະປະທານສານປະຊາຊົນພາກ, ສານທະຫານຂັ້ນສູງ, ສານປະຊາຊົນແຂວງ-ນະຄອນຫຼວງວຽງຈັນ, ສານປະຊາຊົນເຂດ, ຜູ້ພິພາກສາຂອງສານປະຊາຊົນທ້ອງຖິ່ນ, ແຂກທີ່ຖືກເຊີນ ຈາກສະພາແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ, ກະຊວງປ້ອງກັນຄວາມສະຫງົບ ແລະ ກະຊວງຍຸຕິທຳ ພ້ອມດ້ວຍຄະນະຮັບຜິດຊອບກອງປະຊຸມເຂົ້າຮ່ວມ.

ກອງປະຊຸມດັ່ງກ່າວ, ໄດ້ຮັບຟັງບົດສະຫຼຸບຕີລາຄາຜົນຂອງກອງປະຊຸມໃຫຍ່ຜູ້ພິພາກສາ ຄັ້ງທີ X ແລະ ທິດທາງແຜນການກອງປະຊຸມໃຫຍ່ຜູ້ພິພາກສາ ທົ່ວປະເທດ ຄັ້ງທີ XI (2023-2025) ຈາກທ່ານ ບຸນຂວາງ ທະວີສັກ ຮອງປະທານສານປະຊາຊົນສູງສຸດ. ຈາກນັ້ນ, ປະທານກອງປະຊຸມ ໄດ້ມີຄຳເຫັນເຈາະຈີ້ມ. ຈາກນັ້ນ ໄດ້ແບ່ງກຸ່ມຄົ້ນຄວ້າອອກເປັນ 3 ກຸ່ມ ເຊິ່ງແຕ່ລະກຸ່ມໄດ້ຄົ້ນຄວ້າບົດສະຫຼຸບຕີລາຄາຜົນຂອງກອງປະຊຸມໃຫຍ່ຜູ້ພິພາກສາ ຄັ້ງທີ X ແລະ ທິດທາງແຜນການກອງປະຊຸມໃຫຍ່ຜູ້ພິພາກສາ ທົ່ວປະເທດ ຄັ້ງທີ XI (2023-2025) ພ້ອມທັງຄົ້ນຄວ້າກ່ຽວກັບຄຳຖາມ-ຄຳຕອບ ຫຼັງຈາກນັ້ນ, ແຕ່ລະກຸ່ມໄດ້ລາຍງານຜົນຂອງການຄົ້ນຄວ້າ ແລະ ປະກອບຄຳເຫັນເຊິ່ງກັນແລະກັນ; ໄດ້ຮັບຟັງການລາຍງານສັງລວມຄຳຕອບ ທັງສາມກຸ່ມ ຈາກທ່ານ ແສງແກ້ວ ວິລະພົນເດດ ຫົວໜ້າກອງເລຂາ; ກອງປະຊຸມຍັງໄດ້ຮັບຟັງລາຍງານຫຍໍ້ຂອງການດຳເນີນກອງປະຊຸມ ຈາກທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ອີກດ້ວຍ.

ໃນໂອກາດເຂົ້າຮ່ວມກອງປະຊຸມດັ່ງກ່າວ ທ່ານ ປອ. ໄຊສົມພອນ ພົມວິຫານ ໄດ້ມີຄຳເຫັນໂອ້ລົມຕໍ່ກອງປະຊຸມໃຫຍ່ຜູ້ພິພາກສາທົ່ວປະເທດ ຄັ້ງທີ XI ວ່າ: ກອງປະຊຸມໃຫຍ່ຜູ້ພິພາກສາທົ່ວປະເທດ ໃນຄັ້ງນີ້ ເຫັນວ່າມີຄວາມໝາຍຄວາມສຳຄັນຫຼາຍ ສະນັ້ນ, ຂໍຮຽກຮ້ອງມາຍັງບັນດາການນຳ ກໍຄືຜູ້ພິພາກສາຂອງສານປະຊາຊົນທຸກຂັ້ນ ຈົ່ງເສີມຂະຫຍາຍມູນເຊື້ອອັນດີງາມ ແລະ ເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນ, ເປັນໃຈກາງໃນການຮັກສາຄວາມຍຸຕິທຳ ເພື່ອເຮັດໃຫ້ການຕັດສິນ ແລະ ພິພາກສາຄະດີ ມີປະສິດທິພາບ ແລະ ໄດ້ຮັບປະສິດທິຜົນສູງຂຶ້ນກວ່າເກົ່າ ຕ້ອງນຳໃຊ້ວັດຖຸເຕັກນິກທີ່ທັນສະໄໝ ເຂົ້າໃສ່ວຽກງານການບໍລິຫານສານ-ບໍລິຫານຄະດີ ໃຫ້ມີຄວາມວ່ອງໄວ ປະຊາຊົນເຂົ້າເຖິງຂະບວນການຍຸຕິທຳ ໂດຍຫັນລະບົບສານປະຊາຊົນໃຫ້ເປັນສານດີຈິຕອນ, ເອົາໃຈໃສ່ປັບປຸງແບບແຜນການນຳພາ ແລະ ວິທີເຮັດວຽກຂອງຕົນໃຫ້ມີຄວາມຄ່ອງໂຕ ແລະ ສະດວກຍິ່ງຂຶ້ນ ບົນພື້ນຖານລະບຽບກົດໝາຍ, ປະຕິບັດລະບອບປະຊຸມ, ປຶກສາຫາລືກັບພາກສ່ວນກ່ຽວຂ້ອງ ແລະ ໃຫ້ມີລັກສະນະແທດຕົວຈິງ, ມີຈຸດສຸມ, ມີການຕິດຕາມ, ກວດກາ ແລະ ສະຫຼຸບຖອດຖອນບົດຮຽນຢ່າງເປັນປະຈຳ; ຊອກໃຫ້ໄດ້ຜູ້ພິພາກສາດີ-ຜູ້ພິພາກສາເກັ່ງ. ຊອກຫາບຸກຄົນທີ່ພົ້ນເດັ່ນໃນຂະບວນການຕົວຈິງ ເພື່ອເປັນແບບຢ່າງນຳໜ້າໃນຂະບວນການຂອງວຽກງານ ກໍຄືການດຳລົງຊີວິດ ທີ່ປອດໃສຂາວສະອາດ, ດຸໝັ່ນຄົ້ນຄວ້າຮ່ຳຮຽນ, ປະຢັດມັດທະຍັດ, ບໍ່ອາດຍາສິດ ແລະ ສະແຫວງຫາຜົນປະໂຫຍດສ່ວນຕົວທີ່ບໍ່ຊອບທຳ.

(ນາງ ນິດຕາ ຄຸນປາກດີ)

## ເລື່ອງ ເດັ່ນ ຂ່າວ ເດັດ

# ຄັດໂດຍ: ຫອມສະນິດ

*❐ ກະຊວງການເງິນໄດ້ເພີ່ມພັນທະບັດ ແລະ ມີການປັບອັດຕາດອກເບ້ຍເພີ່ມຂຶ້ນສຳລັບພັນທະບັດສະກຸນເງິນກີບໂດຍອີງໃສ່ສະພາບເສດຖະກິດໃນປັດຈຸບັນ ເພື່ອໃຫ້ຜູ້ລົງທຶນກັບມາລົງທຶນໃນພັນທະບັດລັດຖະບານເພີ່ມຂຶ້ນ ໂດຍອັດຕາດອກເບ້ຍໃໝ່ປີ 2023 ພັນທະບັດທີ່ມີອາຍຸ 1 ປີ ອັດຕາດອກເບ້ຍ 5,80%, ອາຍຸ 2 ປີ 6,90%, ອາຍຸ 3 ປີ 7,60%, ອາຍຸ 5 ປີ 7,75%, ອາຍຸ 7 ປີ 7,90% ແລະ ອາຍຸ 10 ປີ 8,15%. ສ່ວນພັນທະບັດລັດຖະບານສະກຸນເງິນໂດລາ ອາຍຸ 1 ປີ ມີອັດຕາດອກເບ້ຍ 5%, ອາຍຸ 2 ປີ 5,50%, ອາຍຸ 3 ປີ 6%, ອາຍຸ 5 ປີ 7%, ອາຍຸ 7 ປີ 7,50% ແລະ ອາຍຸ 10 ປີ 8% ທັງໝົດນີ້ກະຊວງການເງິນຕາງໜ້າໃຫ້ລັດຖະບານລາວ ມີແຜນຈະນຳເງິນໄປໃຊ້ເຂົ້າໃນການບໍລິຫານທົ່ວໄປຂອງລັດຖະບານດັດສົມງົບປະມານ ແລະ ລົງທຶນຕາມໂຄງການຕ່າງໆຂອງລັດຖະບານ.*

***ໜສພ. ປະເທດລາວ 17/03/2023***

*❐ ໃນໄລຍະ 1 ປີຜ່ານມາ, ຂະແໜງສາທາລະນະສຸກໃຫ້ຮູ້ວ່າ: ບັນດາຕົວຊີ້ວັດທີ່ສາມາດບັນລຸໄດ້ ປະກອບມີ: ອັດຕາການຕາຍຂອງເດັກລຸ່ມ 1 ປີ ເຊິ່ງຄາດໝາຍວາງໄວ້ ໃນປີ 2022 ແມ່ນ 26/1.000 ເດັກເກີດມີຊີວິດ ປະຕິບັດໄດ້ 13/1.000 ຂອງເດັກເກີດມີຊີວິດ; ອັດຕາການຕາຍຂອງເດັກລຸ່ມ 5 ປີ ຄາດໝາຍ 36/1.000 ເດັກເກີດມີຊີວິດ ປະຕິບັດໄດ້ 14,80/1.000 ຂອງເດັກເກີດມີຊີວິດ; ອັດຕາສ່ວນຕາຍຂອງແມ່ນຄາດໝາຍ 140/100.000 ເດັກເກີດມີຊີວິດ ປະຕິບັດໄດ້ 64,10/100.000 ຂອງເດັກເກີດມີຊີວິດ; ອັດຕາການຊົມໃຊ້ວິດຖ່າຍຄາດໝາຍ 82% ປະຕິບັດ 83.2%; ອັດຕາການຊົມໃຊ້ນ້ຳສະອາດຄາດໝາຍ 92% ປະຕິບັດ 92,1%; ອັດຕາການການປົກຄຸມການປະກັນສຸຂະພາບຄາດໝາຍ 94,5% ປະຕິບັດໄດ້ 94,5%, ອັດຕາການຮັບຮອງບ້ານສາທາລະນະສຸກແບບຢ່າງຄາດໝາຍ 82% ປະຕິບັດໄດ້ 86,87%; ສ່ວນບັນດາຕົວຊີ້ວັດ ທີ່ບໍ່ສາມາດບັນລຸແມ່ນຄາດໝາຍທີ່ສູ້ຊົນເພື່ອເຮັດໃຫ້ຕົວເລກຫຼຸດລົງໃຫ້ເຫຼືອໜ້ອຍທີ່ສຸດໃນແຕ່ລະປີຈົນກວ່າຈະເປັນສູນຄື: ອັດຕາສ່ວນເດັກນ້ອຍ ອາຍຸລຸ່ມກວ່າ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານຄາດໝາຍປີ 2022 ແມ່ນ 18% ປະຕິບັດໄດ້ 19,5%, ອັດຕາສ່ວນເດັກລຸ່ມ 5 ປີ ທີ່ມີລວງສູງບໍ່ໄດ້ມາດຖານຄາດໝາຍ 30% ປະຕິບັດໄດ້ 31,7%; ການເກີດລູກມີແພດຊ່ວຍຄາດໝາຍປີ 2022 ວາງໄວ້ 82% ປະຕິບັດໄດ້ 80,58%; ອັດຕາການສັກຢາກັນພະຍາດຄາດໝາຍວາງໄວ້ 95% ປະຕິບັດໄດ້ 92,0% ຖືວ່າບໍ່ສາມາດບັນລຸຄາດໝາຍ.*

***ໜສພ. ປະເທດລາວ 17/03/2023***

*❐ ປີ 2020-2022 ມີຄະດີເຂົ້າມາຢູ່ສານຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ທັງໝົດ 21.547 ເລື່ອງ ທຽບໃສ່ຄັ້ງກ່ອນຫຼຸດລົງ 3.227 ເລື່ອງ ຄະດີຄ້າງມາ 2.568 ເລື່ອງ, ລວມທັງໝົດ 24.115 ເລື່ອງ, ໄດ້ແກ້ໄຂແລ້ວ 20.733 ເລື່ອງ ເທົ່າກັບ 85,98% ຖ້າທຽບໃສ່ຄັ້ງກ່ອນຫຼຸດລົງ 3,25% ແລະ ຄະດີຍັງຄ້າງ 3.382 ເລື່ອງ ຖ້າທຽບໃສ່ຄັ້ງຜ່ານມາເຫັນວ່າຄະດີຍັງຄ້າງສູງກວ່າຄັ້ງກ່ອນເຖິງ 477 ເລື່ອງ.*

***ໜສພ. ປະຊາຊົນ 29/03/2023***

# ຜົນສຳເລັດການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023

ຕໍ່ຈາກສະບັບກ່ອນ...

2) ຕິດຕາມກວດກາ ດ້ວຍການດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ, ອົງການໄອຍະການປະຊາຊົນສູງສຸດ, ສານປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສູນກາງແນວລາວສ້າງຊາດ ແລະ ພາກສ່ວນຕ່າງໆທີ່ກ່ຽວຂ້ອງ ເພື່ອປຶກສາຫາລືເປັນເອກະພາບໃນການແກ້ໄຂບັນຫາທີ່ເຄັ່ງຮ້ອນຂອງສັງຄົມ;

3) ຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການແກ້ໄຂບັນຫາຢາເສບຕິດ ແລະ ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ແລະ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

4) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ຈຳນວນໜຶ່ງ ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ຫຼື ມີຜົນກະທົບຢ່າງຫຼວງຫຼາຍ ຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ;

5) ຕິດຕາມກວດກາ ຜ່ານການດຳເນີນກອງປະຊຸມຄົບຄະນະປະຈຳປີ 2023 ຂອງບັນດາກຳມາທິການ, ຄະນະເລຂາທິການສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ພາກສ່ວນກ່ຽວຂ້ອງ;

6) ຕິດຕາມກວດກາຜົນການແກ້ໄຂຄຳສະເໜີຂອງປະຊາຊົນ ຕາມບົດລາຍງານອົງການແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ທີ່ສະເໜີຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX;

7) ຕິດຕາມກວດກາ ຜ່ານກົນໄກການຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ; ຈັດຕັ້ງການຮັບຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ໃນໄລຍະດຳເນີນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ;

8) ຕິດຕາມກວດກາ ການຈັດຕັ້ງການປະຕິບັດໜ້າທີ່ຂອງບຸກຄະລາກອນ ທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ.

4. ວຽກງານສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ສະພາແຫ່ງຊາດ ເອົາໃຈໃສ່ນຳພາ-ຊີ້ນຳວຽກງານສ້າງຄວາມເຂັ້ມແຂງ ໃນປີ 2023 ຈະໄດ້ສຸມໃສ່ຈັດຕັ້ງປະ ຕິບັດຫົວຂໍ້ຕ່າງໆ ດັ່ງນີ້:

1) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອຮັບປະກັນການປະຕິບັດໜ້າທີ່ຢູ່ກອງປະຊຸມສະພາແຫ່ງຊາດແລະກອງປະຊຸມສະພາປະຊາຊົນຂັ້ນແຂວງ ໃນການພິຈາລະນາຮັບຮອງເອົາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ, ການພິຈາລະນາບັນຫາສຳຄັນພື້ນຖານຂອງປະເທດຊາດ, ຂອງທ້ອງຖິ່ນ ແລະ ການຕິດຕາມກວດກາ ໃຫ້ນັບມື້ມີປະສິດທິຜົນສູງຂຶ້ນ;

2) ສ້າງແຜນການບຳລຸງຍົກລະດັບໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໂດຍສະເພາະ ກຳມະການຂອງແຕ່ລະກຳມາທິການ ໄດ້ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນໃນຫົວຂໍ້ຕ່າງໆ ຂອງແຕ່ລະຂົງເຂດວຽກງານ ຢູ່ພາຍໃນ ແລະ ຕ່າງປະເທດ;

3) ສ້າງແຜນການ ເພື່ອກຳນົດຫຼັກສູດການຝຶກອົບຮົມໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເປັນຕົ້ນ ການຄົ້ນຄວ້າເອກະສານ ແລະ ການສ້າງຄູຝຶກເປັນວິທະຍາກອນ;

4) ສືບຕໍ່ຄົ້ນຄວ້າປັບປຸງກົງຈັກ ແລະ ບຸກຄະລາກອນພາຍໃນສະພາແຫ່ງຊາດ;

5) ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ ໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ໃຫ້ພະນັກງານຫຼັກແຫຼ່ງ, ພະນັກງານ-ລັດຖະກອນ ພາຍໃນສະພາແຫ່ງຊາດ;

6) ເອົາໃຈໃສ່ຕິດຕາມຊຸກຍູ້ການສ້າງຫົວຂໍ້ວິທະຍາສາດ, ທັກສະ ແລະ ສ້າງປຶ້ມຄູ່ມື ທີ່ພົວພັນກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ, ກົງຈັກເສນາທິການຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ລວມທັງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານເສນາທິການໃຫ້ມີຄວາມສາມາດຂຶ້ນຕື່ມ ເພື່ອເປັນບ່ອນອີງໃຫ້ແກ່ການປະຕິບັດໜ້າທີ່ວຽກງານ ໃຫ້ມີປະສິດທິຜົນດີຂຶ້ນ;

7) ດຳເນີນກອງປະຊຸມຮ່ວມ ລະຫວ່າງບັນດາກຳມາທິການ, ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ກັບພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອຍົກສູງຄຸນນະພາບການປະຕິບັດໜ້າທີ່ວຽກງານ;

8) ສ້າງແຜນການພົບປະ, ແລກປ່ຽນບົດຮຽນຕ່າງໆ ລະຫວ່າງສະພາແຫ່ງຊາດ ກັບສູນກາງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດ ແລະ ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ເພື່ອປຶກສາຫາລືໃນການປະຕິບັດໜ້າທີ່ວຽກງານຕາມພາລະບົດບາດຂອງແຕ່ລະພາກສ່ວນ.

5. ວຽກງານຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ

1) ຊີ້ນຳການປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ ເພື່ອຈັດຕັ້ງປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຢູ່ແຕ່ລະທ້ອງຖິ່ນ ຕາມກົດໝາຍກຳນົດ ໃຫ້ນັບມື້ມີປະສິດທິຜົນດີຂຶ້ນ;

ອ່ານຕໍ່ສະບັບໜ້າ...

## ຊີວິດ...

(ຕໍ່ຈາກໜ້າ 1)

ໃຕ້ຮູ້ເໜືອເລື່ອງວຽກບ້ານການເມືອງເທື່ອ ແຕ່ກໍພໍເຂົ້າໃຈເນື້ອໃນຈົ່ມທຸກ, ຄວາມອຶບເອົ້າເສົ້າໃຈຂອງຊາວບ້ານໃນແຈໜຶ່ງຂອງແຂວງອັດຕະປື, ເພາະໃນແຂວງນີ້ເອງ ທີ່ທ່ານ ກີນິມ ພົນເສນາ ມີສ່ວນແຈ້ງເກີດບົດບາດທາງການເມືອງທີ່ໂດດເດັ່ນຂອງທ່ານ. ທ່ານເຄີຍເປັນເຈົ້າແຂວງ ແລະ ຜູ້ແທນລາສະດອນທີ່ຊາວອັດຕະປືໃຊ້ສິດເລືອກເອົາກັບມື. ຄຳເຫັນທີ່ເຈືອປົນຄວາມໂສກເສົ້າອາໄລອາວອນຂອງຄົນຮ່ວມບ້ານເກີດຂອງຜູ້ຂຽນນັ້ນ ກ້ຽວໆວຽນໆຢູ່ກັບເລື່ອງຄຸນງາມຄວາມດີ ແລະ ຜົນງານຂອງທ່ານ ກີນິມ ພົນເສນາ ເວລາເພິ່ນເຮັດໜ້າທີ່ ເປັນເຈົ້າແຂວງ ເພາະເພິ່ນເປັນເຈົ້າແຂວງມືເຖິງ, ເພິ່ນລົງຕິດແທດປະຊາຊົນ, ເພິ່ນປາກເວົ້າ-ມືເຮັດ ອິຫຼີ. ພ້ອມໆກັບສຽງຍ້ອງຍໍສັນລະເສີນທີ່ຊາວບ້ານ ກໍຄືຊາວແຂວງອັດຕະປື ທັງມວນມອບໃຫ້ທ່ານ ກີນິມ ພົນເສນາ ທີ່ຈາກ



ພວກເຮົາໄປຄາຕຳແໜ່ງລັດຖະມົນຕີການຕ່າງປະເທດໃນລັດຖະບານປະສົມສາມຝ່າຍນັ້ນ, ກໍມີຄົນບໍ່ດີຈຳນວນໜຶ່ງພາກັນຂຶ້ນເຮືອນເໜືອລົງເຮືອນໃຕ້ໂຄສະນາບິດເບືອນວ່າທ່ານ ກີນິມ ຖືກຄາຕະກຳຍ້ອນເພິ່ນເປັນຄົນຂາຍຊາດໃຫ້ຕ່າງປະເທດ, ຍ້ອນເພິ່ນມັກລະບອບກອມມຸຍນິດແຂ້ວຈີກແຂ້ວສຽມ, ລວມລູກລວມເມຍ ດັ່ງນັ້ນ ຈຶ່ງມີຄົນໄປຂ້າເພິ່ນຖິ້ມ. ພວກຄົນບໍ່ດີທີ່ວ່ານີ້ ແມ່ນລູກແຫຼ້ງຕີນມືຂອງກຸ່ມລາວຂາຍຊາດ ແລະ ອິດທິຈັກກະພັດ ທີ່ຕັ້ງໜ້າເປັນສັດຕູພິດຕໍ່ປະເທດພວກເຮົາ. ຜູ້ຂຽນຍັງພໍຈຳໄດ້ ເວລາເລືອກຕັ້ງເພິ່ນໃນປີ 1958 (ເວລານັ້ນ ຜູ້ຂຽນມີອາຍຸ 7 ປີ) ກໍແມ່ນຄົນກຸ່ມດຽວນີ້ລະ ທີ່ໃຊ້ອຳນາດບັງຄັບດ້ວຍປາຍປືນບໍ່ໃຫ້ຊາວອັດຕະປືປ່ອນບັດເອົາທ່ານ ໄກສອນ ພົມວິຫານ ເປັນຜູ້ແທນລາສະດອນ. ແຕ່ຊາວອັດຕະປືບໍ່ຟັງ. ສຸດທ້າຍພວກເຂົາກໍພາກັນປຸ້ນຫີບບັດທ່ານ ໄກສອນ. ເມື່ອທ່ານ ໄກສອນ ກັບຄືນສູ່ເຂດປົດປ່ອຍ ພວກເຂົາກໍໃສ່ຮ້າຍວ່າ ທ່ານ ໄກສອນ ໂຕນເຂົ້າປ່າຍ້ອນຄຽດບໍ່ໄດ້ເປັນຜູ້ແທນ ແຕ່ຊາວອັດຕະປືບໍ່ມີໃຜເຊື່ອ. ດັ່ງນັ້ນ ການບິດເບືອນໃສ່ຮ້າຍປ້າຍສີກ່ຽວກັບການຄາຕະກຳທ່ານ ກີນິມ ພົນເສນາ ຈຶ່ງບໍ່ມີໃຜງ່ຽງຫູຟັງໃຫ້ເປືອງເຈ້ຍຫູອີກລ້າໆ.

ທ່ານ ກີນິມ ພົນເສນາ ໄດ້ຈາກພວກເຮົາໄປຄົບ 6 ທົດສະວັດໃນວັນທີ 1 ເມສາ ປີ 2023 ນີ້ ໃນໄວອາຍຸບໍ່ເຕັມ 52 ປີສົມບູນເທື່ອ ແຕ່ທ່ານໄດ້ປະໄວ້ບົດຮຽນທີ່ມີຄຸນຄ່າລາຄາແພງ ເປັນແວ່ນແຍງທີ່ໃສແຈ້ງສຳລັບບັນດານັກປະຕິວັດໃນຍຸກຕໍ່ມາ ກໍຄືອະນຸຊົນທີ່ເກີດມາພາຍຊ້ອຍ ທ່ານ ກີນິມ ເລີ່ມສ້າງອະນາຄົດຕັ້ງແຕ່ຢູ່ໃນໄວໜຸ່ມທີ່ຫ້າວຫັນ ເອົາການສຶກສາເປັນສາລະນະ (ທີ່ເພິ່ງ) ເພື່ອສ້າງຄວາມເຂັ້ມແຂງແຮງກ້າດ້ານຄວາມຮູ້ສະຕິປັນຍາຈົນສາມາດກ້າວສູ່ຕຳແໜ່ງງານ ແລະ ຄວາມຮັບຜິດຊອບຕາມລຳດັບ ເລີ່ມແຕ່ອາຊີບນາຍພາສາ ໄຕ່ຂຶ້ນສູ່ຕັ່ງເຈົ້າເມືອງ, ຮອງເຈົ້າແຂວງແຂວງຈຳປາສັກ, ເຈົ້າແຂວງແຂວງອັດຕະປື, ເຈົ້າແຂວງ ແຂວງຫົວພັນ, ຜູ້ແທນລາສະດອນ ແຂວງອັດຕະປື, ສ້າງຕັ້ງ ແລະ ເປັນປະທານພັກສັນຕິພາບເປັນກາງ, ລັດຖະມົນຕີກະຊວງຖະແຫຼງຂ່າວ ແລະ ໂຄສະນາການ, ເປັນທະນາຍຄວາມ ຕໍ່ສູ້ເພື່ອບັນດາຜູ້ນຳແນວລາວຮັກຊາດ ທີ່ຖືກຄຸມຂັງໃນຄຸກຄ້າຍໂພນເຄັງ, ເປັນລັດຖະມົນຕີການຕ່າງປະເທດ 3 ສະໄໝ ໃນໄລຍະຕ່າງກັນ (1960, 1961 ແລະ 1962 ຈົນຮອດມື້ຖືກຄາຕະກຳ). ໃນວັນທີ 13 ກໍລະກົດ 1962, ເປັນຫົວໜ້າຄະນະຜູ້ແທນຂອງລັດຖະບານປະສົມສາມຝ່າຍເຂົ້າຮ່ວມກອງປະຊຸມເຊີແນວກ່ຽວກັບລາວ, ທັງໄດ້ຕາງໜ້າໃຫ້ລັດຖະບານລາວ ຮ່ວມລົງນາມໃນສັນຍາເຊີແນວ ກັບ 13 ປະເທດ ກ່ຽວກັບລາວ.

ຈາກຊີວິດ ແລະ ການເຄື່ອນໄຫວຂອງທ່ານ ກີນິມ ພົນເສນາ ທີ່ເລົ່າມາພໍສັງເຂບນັ້ນ ພວກເຮົາເຫັນນຳກັນແລ້ວວ່າ ທ່ານ ກີນິມ ແມ່ນລັດຖະບຸລຸດຄົນສຳຄັນຜູ້ໜຶ່ງຂອງຊາດລາວພວກເຮົາ, ທ່ານເປັນປັນຍາຊົນ (ມີການສຶກສາສູງ ທຽບກັບໄລຍະນັ້ນ) ເປັນນັກປົກຄອງ "ປາກເວົ້າມືເຖິງ" (ເຈົ້າເມືອງ-ເຈົ້າແຂວງ) ເປັນກະບອກສຽງທີ່ກ້າແກ່ນສຽບຂາດໃນສະພາ (ຜູ້ແທນລາສະດອນ) ເຮັດໜ້າທີ່ເປັນຫົວໜ້າຝ່າຍຄ້ານໃນສະພາ, ເປັນນັກຈັດຕັ້ງນຳພາ (ສ້າງຕັ້ງ ແລະ ເປັນປະທານພັກສັນຕິພາບເປັນກາງ) ເປັນນັກກົດໝາຍທີ່ບໍລິສຸດ ແລະ ທ່ຽງທຳ (ເຮັດໜ້າທີ່ທະນາຍຄວາມ) ເປັນນັກບໍລິຫານລະດັບປະເທດ (ເປັນລັດຖະມົນຕີ) ເປັນນັກເຄື່ອນໄຫວສາກົນທີ່ມີໄຫວພິບສາມາດເຮັດໜ້າທີ່ເປີດກວ້າງສູ່ການພົວພັນຮ່ວມມືກັບບັນດາປະເທດເພື່ອນມິດແລະສາກົນ.

ທ່ານ ກີນິມ ພົນເສນາ ມີນ້ຳໃຈຮັກເຊື້ອແພງຊາດຢ່າງດູດດື່ມ, ເປັນນັກຕໍ່ສູ້ຫົວຂາດຄາຕ້ານຄວາມອະຍຸຕິທຳ, ອິດທິກຳລັງປໍລະປັກ ແລະ ພວກປະຕິການຂາຍຊາດ, ການເຄື່ອນໄຫວປະຕິວັດຂອງທ່ານ ກີນິມ ພົນເສນາ ນັ້ນ ເປັນກາຍອັນຊີດຽວກັບແນວທາງຖືກຕ້ອງເປັນທຳຂອງກຳລັງແນວລາວຮັກຊາດ ແລະ ປະຊາຊົນທີ່ຮັກຫອມສັນຕິພາບໃນທົ່ວໂລກ. ນີ້ລະຄືສ້ຽນທັ່ງຕາຂອງພວກປະຕິການຂາຍຊາດ ທີ່ຍອມກົ້ມຫົວເປັນຂ້ອຍຂ້າຂອງຕ່າງປະເທດ.

"ເມສາດຳ" ປີ 1963 ແມ່ນມັດໄຟທີ່ປະກອບສ່ວນໃຫ້ແສງສະຫວ່າງເຍືອງທາງເດີນແກ່ພວກເຮົາຈົນຮອດມື້ນີ້ ແລະ ຕໍ່ໆໄປພາຍຂ້າງໜ້າ.



## ປະທານ...

(ຕໍ່ຈາກໜ້າ 1)

ຢາມບໍລິສັດ ໄຟຟ້ານ້ຳເທີນ 1 ຈຳກັດ ຢູ່ເມືອງປາກກະດິງ ແຂວງບໍລິຄຳໄຊ.

ໂອກາດດັ່ງກ່າວ, ຄະນະໄດ້ຮັບຟັງການລາຍງານວຽກງານໂຄງການເຂື່ອນໄຟຟ້ານ້ຳເທີນ 1 ໂດຍຫຍໍ້ ຈາກທ່ານ ປຣິຊາ ກັນທະມູນ ຮອງປະທານບໍລິສັດ ຈະເລີນເຊກອງ ພະລັງງານຈຳກັດ. ຈາກນັ້ນ, ຄະນະຕິດຕາມ ໄດ້ມີຄຳຖາມເຈາະຈີ້ມ ແລະ ແລກປ່ຽນຄຳຄິດຄຳເຫັນ ເຊິ່ງກັນແລະກັນ.

ຈາກນັ້ນ, ທ່ານປະທານສະພາແຫ່ງຊາດ ໄດ້ມີຄຳເຫັນ ເພື່ອໃຫ້ທິດຊີ້ນຳຕໍ່ບໍລິສັດດັ່ງກ່າວ ເຊິ່ງກ່ອນອື່ນທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນສຳເລັດບັນດາກິດຈະກຳຂອງບໍລິສັດດັ່ງກ່າວ ແລະ ມີຄຳເຫັນເນັ້ນຕໍ່ບໍລິສັດໃຫ້ເອົາໃຈໃສ່ບັນຫາຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດສັນທີ່ຢູ່ອາໄສໃຫ້ປະຊາຊົນ, ການສ້າງວຽກເຮັດງານທຳ, ການທ່ອງທ່ຽວ, ການສ້າງບຸກຄະລາກອນສືບທອດ.

ຫຼັງຈາກນັ້ນ, ຄະນະ ກໍໄດ້ຢ້ຽມຊົມພື້ນທີ່ໂຄງການຕົວຈິງ ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ ຕັ້ງຢູ່ນ້ຳກະດິງ (ຈຸດຕາດວັງຟອງ) ເມືອງປາກກະດິງ ແຂວງບໍລິຄຳໄຊ, ມີມູນຄ່າໂຄງການ 1.335 ລ້ານໂດລາ ໃນນັ້ນ, ບໍລິສັດລາວຖືຮຸ້ນກວມ 75%, ໄດ້ເລີ່ມລົງມືກໍ່ສ້າງແຕ່ປີ 2016 ແລະ ສຳເລັດໃນທ້າຍປີ 2022 ແລະ ມີອາຍຸສຳປະທານ 27 ປີ ນັບແຕ່ມື້ຂາຍໄຟຢ່າງເປັນທາງການ. ເຂື່ອນດັ່ງກ່າວເປັນເຂື່ອນຄອນກຣີດອັດແຮງ, ມີຄວາມຍາວ 771 ແມັດ, ສູງ 177 ແມັດ, ເນື້ອທີ່ອ່າງໂຕ່ງ 13.856 km2, ບໍລິມາດນ້ຳໃຊ້ໃນການຜະລິດ 3.000 ລ້ານ Mm3, ມີເຄື່ອງປັ່ນໄຟ 3 ໜ່ວຍ, ການຕິດຕັ້ງເຄື່ອງຈັກແບບແກນຕັ້ງ, ສະຖານີສິ່ງໄຟຟ້າ 500 ກິໂລໂວນ, ມີກຳລັງຕິດຕັ້ງ 650 ເມກາວັດ, ພະລັງງານສາມາດຜະລິດໄດ້ຕໍ່ປີ 2.561,6 ກິກກາວັດໂມງຕໍ່ປີ. ມາຮອດປັດຈຸບັນ, ເຂື່ອນດັ່ງກ່າວ ແມ່ນສຳເລັດແລ້ວ ແລະ ເລີ່ມຂາຍໄຟຟ້າຢ່າງເປັນທາງການໃນວັນທີ 12 ສິງຫາ 2022.

ບໍລິສັດ ໄຟຟ້າ ນ້ຳເທີນ 1 ຈຳກັດ ໄດ້ເອົາໃຈໃສ່ບັນດາໜ້າວຽກທີ່ສຳຄັນ ເປັນຕົ້ນ: ວຽກງານສິ່ງແວດລ້ອມ, ວຽກງານສັງຄົມ, ວຽກງານກວດສອບສາຍສົ່ງ, ວຽກງານບຳລຸງຮັກສາສ້ອມແປງເຄື່ອງຈັກ, ການບໍລິຫານຈັດການນ້ຳ ແລະ ວຽກທົດສອບເຄື່ອງຈັກປັ່ນໄຟ.

## ຄະນະ...

(ຕໍ່ຈາກໜ້າ 1)

ການເຂົ້າຮ່ວມຂອງສະຫາຍ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ, ຮອງປະທານສະພາແຫ່ງຊາດ, ມີບັນດາສະຫາຍເລຂາ-ຮອງເລຂາ, ປະທານ-ຮອງປະທານກວດກາ ແລະ ກຳມະການໜ່ວຍພັກຮາກຖານ, ຄະນະພັກຮາກຖານ, ຜູ້ກວດກາໜ່ວຍພັກທີ່ຂຶ້ນກັບຄະນະພັກຮາກຖານ ແລະ 3 ອົງການຈັດຕັ້ງມະຫາຊົນ ພາຍໃນສະພາແຫ່ງຊາດ ແລະ ແຂກຖືກເຊີນ.

ກອງປະຊຸມ, ໄດ້ຮັບຟັງການປາຖະກະຖາມູນເຊື້ອວັນສ້າງຕັ້ງອົງການກວດກາພັກ-ລັດ ຄົບຮອບ 41 ປີ (16/02/1982-16/02/2023); ການເຜີຍແຜ່ຜົນສຳເລັດກອງປະຊຸມວຽກງານກວດກາທົ່ວປະເທດ ປະຈຳປີ 2022, ທິດທາງຄາດໝາຍສູ້ຊົນວຽກງານກວດກາ ປະຈຳປີ 2023 ຂອງຄະນະກວດກາສູນກາງພັກ ແລະ ອົງການກວດກາແຫ່ງລັດ; ເຜີຍແຜ່ບົດສະຫຼຸບການເຄື່ອນໄຫວວຽກງານກວດກາ ປະຈຳປີ 2022 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2023 ຂອງຄະນະກວດກາພັກ-ລັດສະພາແຫ່ງຊາດ; ຮັບຟັງການປະກອບຄຳຄິດຄຳເຫັນໃສ່ບົດສະຫຼຸບດັ່ງກ່າວ ຈາກບັນດາສະຫາຍທີ່ເຂົ້າຮ່ວມກອງປະຊຸມ; ຈາກນັ້ນ, ກອງປະຊຸມ ກໍໄດ້ຮັບຟັງການໂອ້ລົມຂອງສະຫາຍຮອງເລຂາຄະນະບໍລິຫານງານພັກສະພາແຫ່ງຊາດ.

(ສອນສັກ ວັນວິໄຊ)



## ສສຊ...

(ຕໍ່ຈາກໜ້າ 1)

ທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ພໍ່ຄ້າຊາວຂາຍ ແລະ ປະຊາຊົນບັນດາເຜົ່າ ຢູ່ເມືອງໂພນໂຮງ ແຂວງວຽງຈັນ ເຊິ່ງໄດ້ເຄື່ອນໄຫວຢູ່ 10 ຈຸດ ຄື: ບ້ານໂພນໂຮງ, ຫ້ອງວ່າການເມືອງ, ບ້ານໂພນຄຳໃຕ້, ສະໂມສອນໃຫຍ່ວິທະຍາຄານກົມມະດຳ, ບ້ານນາຊູ, ບ້ານດົງຂາວ, ບ້ານຫ້ວຍຫີນ, ບ້ານໂນນສະຫວ່າງ, ບ້ານຂາມ ແລະ ຢ້ຽມຢາມໂຮງງານຫົວອາຫານດາວໄຟ.

ໃນການພົບປະ ແລະ ເຜີຍແຜ່ບັນດາເນື້ອໃນເອກະສານຄັ້ງນີ້ ປະກອບມີມະຕິສຳຄັນຕ່າງໆທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງວຽງຈັນ ຊຸດທີ II ໂດຍຕິດພັນກັບການເຜີຍແຜ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງ ສສຊ ແລະ ສສຂ ໃຫ້ສະມາຊິກພັກ, ພະນັກງານ-ລັດຖະກອນ ແລະ ພໍ່ແມ່ປະຊາຊົນໄດ້ຮັບຮູ້, ເຊື່ອມຊຶມ ເຖິງບັນດາເນື້ອໃນກອງປະຊຸມ ແລະ ແນວທາງນະໂຍບາຍຂອງພັກ-ລັດ; ຈາກນັ້ນ, ຍັງໄດ້ຮັບຟັງຄຳຄິດຄຳເຫັນ, ຄຳສະເໜີ ຄວາມຂັດຂ້ອງໝອງໃຈ, ຄວາມຫຍຸ້ງຍາກລຳບາກໃນການດຳລົງຊີວິດຂອງພໍ່ແມ່ປະຊາຊົນ ເຊິ່ງໄດ້ມີຫຼາຍບັນຫາທີ່ສະເໜີຕໍ່ ສສຊ ແລະ ສສຂ ພ້ອມທັງໄດ້ຊີ້ແຈງອະທິບາຍ ແລະ ໃຫ້ຄວາມກະຈ່າງແຈ້ງຕໍ່ພໍ່ແມ່ປະຊາຊົນໄດ້ຮັບຊາບ ແລະ ນຳເອົາທຸກຄຳສະເໜີຂອງປະຊາຊົນໄປສົມທົບກັບຂະແໜງການ, ເມືອງ, ແຂວງ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າພິຈາລະນາແກ້ໄຂຕາມຂັ້ນຕອນ ແລະ ລະບຽບການວາງອອກ.

ພ້ອມດຽວກັນນັ້ນ, ບັນດາທ່ານ ສສຊ ແລະ ສສຂ ຍັງໄດ້ມອບໂນດບຸກ, ອຸປະກອນຮັບໃຊ້ຫ້ອງການໃຫ້ແກ່ບ້ານ, ເມືອງ ແລະ ເຄື່ອງກິລາຈຳນວນໜຶ່ງ ໃຫ້ແກ່ວິທະຍາຄານກົມມະດຳ.

(ນັກຂ່າວ ສພຂ ວຽງຈັນ)

## ກອງປະຊຸມ...

(ຕໍ່ຈາກໜ້າ 1)

ແຂວງ (ແຂວງຜົ້ງສາລີ, ບໍ່ແກ້ວ, ໄຊຍະບູລີ, ຫົວພັນ ແລະ ໄຊສົມບູນ); ຮັບຟັງການລາຍງານຂອງທ່ານ ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ກ່ຽວກັບຜົນສຳເລັດການເຂົ້າຮ່ວມກອງປະຊຸມສະຫຼຸບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຂັ້ນສູນກາງ ປະຈຳປີ 2022 ແລະ ທິດທາງແຜນການປະຈຳປີ 2023 ຢູ່ 5 ຈຸດ ທົ່ວປະເທດ; ແຜນການລົງເຄື່ອນໄຫວຕິດຕາມກວດກາ ຂົງເຂດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ນັກຮົບເກົ່າ ປະຈຳປີ 2023; ກຳມາທິການຍຸຕິທຳ ລາຍງານການຄົ້ນຄວ້າໜັງສືສະເໜີຂອງສານປະຊາຊົນສູງສຸດ ກ່ຽວກັບການສະເໜີແຕ່ງຕັ້ງ, ຍົກຍ້າຍ ບຸກຄະລາກອນຂອງສານປະຊາຊົນ; ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ລາຍງານກ່ຽວກັບການກະກຽມວຽກງານປະເມີນຄວາມໄວ້ວາງໃຈຕໍ່ບຸກຄະລາກອນດຳລົງຕຳແໜ່ງທີ່ສະພາແຫ່ງຊາດເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ; ຮ່າງຄຳແນະນຳ ຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບປະເມີນຄວາມໄວ້ວາງໃຈ ຕໍ່ບຸກຄະລາກອນ ທີ່ສະພາປະຊາຊົນຂັ້ນແຂວງເລືອກຕັ້ງ ຫຼື ຮັບຮອງເອົາການແຕ່ງຕັ້ງ; ກຳມາທິການບັນດາເຜົ່າ ລາຍງານແຜນການໄປຢ້ຽມຢາມ ແລະ ຖອດຖອນບົດຮຽນ ກ່ຽວກັບວຽກງານຂອງກຳມາທິການບັນດາເຜົ່າທີ່ ຣາຊະອານາຈັກກຳປູເຈຍ; ກຳມາທິການການຕ່າງປະເທດ ລາຍງານການກະກຽມກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ກຳປູເຈຍ, ລາວ ແລະ ຫວຽດນາມ (CLV).

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ວັນທີ 28 ມີນາ 2023 ໄດ້ຮັບຟັງການລາຍງານຂອງ ກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກ່ຽວກັບການລົງເຄື່ອນໄຫວຕິດຕາມ, ຊຸກຍູ້ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການ ແລະ ຫົວໜ່ວຍທຸລະກິດຢູ່ເຂດນິຄົມອຸດສາຫະກຳ ແລະ ການຄ້າ ວຽງຈັນ-ໂນນທອງ, ເຂດພັດທະນາກວມລວມໄຊເຊດຖາ ແລະ ການຈັດຕັ້ງປະຕິບັດໂຄງການລົງທຶນບໍລິການໂລຊິດສະຕິກທ່າບົກ-ທ່ານາແລ້ງ; ລາຍງານກ່ຽວກັບການປັບປຸງໂຄງສ້າງລາຄາໄຟຟ້າ ສະເພາະພາກບໍ່ແມ່ນທີ່ຢູ່ອາໄສ; ຮັບຟັງການລາຍງານຂອງ ກະຊວງແຜນການ ແລະ ການລົງທຶນ ກ່ຽວກັບການຄົ້ນຄວ້ານະໂຍບາຍແກ້ໄຂໜີ້ໂຄງການລົງທຶນຂອງລັດ ດ້ວຍຮູບແບບອວ່າຍໜີ້ກັບທະນາຄານ, ການລາຍງານຂອງກະຊວງການເງິນ ກ່ຽວກັບການຈັດສັນແຜນເງິນລົງທຶນຂອງລັດບ້ວງລົງທຶນອື່ນ ປະຈຳປີ 2023; ການລາຍງານຂອງທະນາຄານ ແຫ່ງ ສປປ ລາວ ກ່ຽວກັບວຽກງານການເງິນ ແລະ ການເຮັດທົດລອງທຸລະກິດເງິນຄຣິບໂຕ; ລາຍງານການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບການເກັບອາກອນແບບເດັດຖານ ສະເພາະກິດຈະການຄາຊີໂນ ແລະ ຍົກເວັ້ນການເກັບອາກອນກິດຈະການຄາຊີໂນ;

ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ວັນທີ 29 ມີນາ 2023 ໄດ້ຮັບຟັງການລາຍງານຂອງກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກ່ຽວກັບຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ທີ່ພົວພັນກັບໂຄງການຂຸດຄົ້ນ ແລະ ປຸງແຕ່ງ ແຮ່ຄຳ ຢູ່ເຂດບ້ານນ້ຳຊອນເມືອງພູວົງ, ແຂວງອັດຕະປື ຂອງບໍລິສັດ ລາວວ້ານເລີຍ ບໍ່ແຮ່ ຈຳກັດ; ຜົນການຄົ້ນຄວ້າໜັງສືສະເໜີຂອງລັດຖະບານ ກ່ຽວກັບໂຄງການໄຟຟ້າແສງຕາເວັນ ເທິງອ່າງນ້ຳງື່ມ 1 ເມືອງລ້ອງຊານ ແຂວງໄຊສົມບູນ ຂອງບໍລິສັດ ໄຟຟ້າແສງຕາເວັນເທິງໜ້ານ້ຳງື່ມ 1 ຈຳກັດ; ກຳມາທິການກົດໝາຍລາຍງານຄວາມຄືບໜ້າຂອງການປະກາດໃຊ້ກົດໝາຍ ຈຳນວນ 12 ສະບັບ ທີ່ຜ່ານການພິຈາລະນາຮັບຮອງເອົາ ຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ແລະ ຄວາມກຽມພ້ອມຂອງບັນດາຮ່າງກົດໝາຍ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ລາຍງານຜົນການຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ຢູ່ແຂວງຫົວພັນ, ຊຽງຂວາງ ແລະ ໄຊສົມບູນ. ພ້ອມກັນນັ້ນ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຍັງໄດ້ພິຈາລະນາວຽກງານອື່ນ ຈຳນວນໜຶ່ງ.

# ເອກອັກຄະລັດຖະທູດ ສ.ອາເມລິກາ ພົບປະຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາ




(ສພຊ) ຕອນເຊົ້າຂອງວັນທີ 16 ມີນາ 2023 ທ່ານ ປີເຕີ ເຮມ່ອນ ເອກອັກຄະລັດຖະທູດ ສະຫະລັດອາເມລິກາ (ສ.ອາເມລິກາ) ປະຈຳ ສປປ ລາວ ພ້ອມດ້ວຍຄະນະ ໄດ້ເຂົ້າພົບປະທ່ານ ຄຳຟອງ ອິນມານີ ປະທານສະພາປະຊາຊົນແຂວງຫຼວງນ້ຳທາ ພ້ອມດ້ວຍຄະນະປະຈຳສະພາປະຊາຊົນແຂວງຫຼວງນ້ຳທາ ເຂົ້າຮ່ວມທັງໝົດ 15 ຄົນ ຍິງ 4 ຄົນ.

ທ່ານ ຄຳຟອງ ອິນມານີ ໄດ້ລາຍງານການຈັດຕັ້ງປະຕິບັດລັດຖະທຳມະນູນ ແລະ ກົດໝາຍ ໃນຂົງເຂດຕ່າງໆ, ການຕິດຕາມກວດກາການຈັດຕັ້ງປະຕິບັດສອງວາລະແຫ່ງຊາດ, ການຕ້ານ ແລະ ສະກັດກັ້ນການຄ້າມະນຸດ ແລະ ບັນຫາທີ່ພົ້ນເດັ່ນອື່ນໆຈຳນວນໜຶ່ງ, ລາຍງານສະພາບລວມ ແລະ ການເຄື່ອນໄຫວວຽກໂຄງການຊ່ວຍເຫຼືອລ້າຈາກອົງການຈັດຕັ້ງສາກົນຂອງສະພາປະຊາຊົນແຂວງຫຼວງນ້ຳທາ.

ພ້ອມນັ້ນ, ທ່ານ ປີເຕີ ເຮມ່ອນ ໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບລວມ ແລະ ວຽກງານໂຄງການທີ່ພວມດຳເນີນຢູ່ ໂດຍສະເພາະແມ່ນການຍົກຂີດຄວາມສາມາດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານທີ່ເປັນເສນາທິການ, ສົ່ງເສີມໄວໜຸ່ມໃຫ້ມີວຽກເຮັດງານທຳ, ການສະກັດກັ້ນ ແລະ ຕ້ານການຄ້າມະນຸດ, ວຽກງານຕ້ານ ແລະ ສະກັດກັ້ນຢາເສບຕິດ ແລະ ວຽກງານອື່ນໆ.

# ພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ເມືອງງອຍ

(ສພຊ) ໃນລະຫວ່າງວັນທີ 13-16 ມີນາ 2023 ທ່ານ ສຸວິລັດ ພົນສຸເດດ ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງງອຍ ແຂວງຫຼວງພະບາງ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ເຄື່ອນໄຫວພົບປະໂອ້ລົມຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ຊຸດທີ II ຢູ່ 5 ຈຸດ ລວມມີ 5 ບ້ານ ຄື: ບ້ານຫ້ວຍປຸ່ງ, ບ້ານໜອງອ່ຽມ, ບ້ານວັງງູ, ບ້ານຫ້ວຍລໍ້ສູງ ແລະ ບ້ານຫ້ວຍລໍ້ເທິງ ເມືອງງອຍ ແຂວງຫຼວງພະບາງ; ເຂົ້າຮ່ວມຮັບຟັງມີອຳນາດການປົກຄອງບ້ານ, ເຖົ້າແກ່ແນວໂຮມ ຕະຫຼອດຮອດພໍ່ແມ່ປະຊາຊົນ ເຂົ້າຮ່ວມທັງໝົດ 470 ຄົນ ຍິງ 227 ຄົນ.



ການເຄື່ອນໄຫວໃນຄັ້ງນີ້, ກໍເພື່ອເປັນການພົບປະໂອ້ລົມພໍ່ແມ່ປະຊາຊົນຢູ່ທ້ອງຖິ່ນຮາກຖານ ແລະ ນຳເອົາຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ໂດຍສະເພາະແມ່ນເນື້ອໃນທີ່ສຳຄັນຂອງກອງປະຊຸມ ທີ່ບັນດາທ່ານສະມາຊິກສະພາປະຊາຊົນແຂວງ ໄດ້ສຸມເຫື່ອແຮງ ແລະ ສະຕິປັນຍາຂອງຕົນ ເຂົ້າໃນການຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງ ຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງຫຼວງພະບາງ ຊຸດທີ II ມາເຜີຍແຜ່ໃຫ້ພໍ່ແມ່ປະຊາຊົນຢູ່ 5 ບ້ານດັ່ງກ່າວ ໄດ້ຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ.

ພ້ອມດຽວກັນນີ້, ແມ່ນຖືເອົາໂອກາດຮັບຟັງຄຳຄິດ, ຄຳເຫັນ, ຄຳສະເໜີຈາກພໍ່ແມ່ປະຊາຊົນບັນດາເຜົ່າໃຫ້ມີຄວາມສາມັກຄີຊ່ວຍເຫຼືອເຊິ່ງກັນແລະກັນ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ ທັງມີບາງຄຳເຫັນໂອ້ລົມຕໍ່ການສະເໜີຂອງປະຊາຊົນ ເຊິ່ງໄດ້ສະແດງຄວາມເຫັນເປັນເອກະພາບຕໍ່ຄຳຄິດ, ຄຳເຫັນ ແລະ ຄຳສະເໜີຂອງພໍ່ແມ່ປະຊາຊົນ ເປັນຕົ້ນແມ່ນບັນຫາໄຟຟ້າ ແລະ ສຸກສາລາ ແມ່ນມີຄວາມຈຳເປັນທີ່ສຸດຕໍ່ການດຳລົງຊີວິດຂອງປະຊາຊົນ ແລະ ຮັບປະກັນສຸຂະພາບຂັ້ນພື້ນຖານໃຫ້ກັບປະຊາຊົນ, ຕໍ່ກັບບັນຫາເສັ້ນທາງແມ່ນສະປະຊາຊົນຕໍ່ວຽກງານຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມຂອງເມືອງ ແລະ ຮັບຄຳສະເໜີທີ່ປະຊາຊົນ 5 ບ້ານສະເໜີຫຼາຍກວ່າໝູ່ແມ່ນບັນຫາພື້ນຖານໂຄງລ່າງ ໂດຍສະເພາະແມ່ນປະຊາຊົນບ້ານວັງງູ, ບ້ານຫ້ວຍລໍ້ສູງ ແລະ ຫ້ວຍລໍ້ເທິງ ສະເໜີໃຫ້ລັດຊ່ວຍປັບປຸງເສັ້ນທາງ, ສ້າງສຸກສາລາ, ປັບປຸງຫ້ອງຮຽນ, ຂະຫຍາຍຕາຂ່າຍໄຟຟ້າ, ເສົາສັນຍານໂທລະສັບ, ລົງຊຸກຍູ້ ແລະ ສົ່ງເສີມການປູກຝັງລ້ຽງສັດ ແລະ ອື່ນໆ.

ທ່ານ ສຸວິລັດ ພົນສຸເດດ ໄດ້ຮຽກຮ້ອງໃຫ້ພໍ່ແມ່ປະເໜີໃຫ້ພໍ່ແມ່ປະຊາຊົນພ້ອມກັນເອົາໃຈໃສ່ປົກປັກຮັກສາເສັ້ນທາງທີ່ມີຢູ່ແລ້ວໃຫ້ຍືນຍົງ, ສ້າງຮອງລະບາຍນ້ຳ, ຮັກສາຕົ້ນໄມ້ຢູ່ແຄມທາງບໍ່ໃຫ້ເຊາະເຈື່ອນ ແລະ ພ້ອມກັນອະນາໄມສາມສະອາດໃຫ້ໄດ້ ເພື່ອປ້ອງກັນພະຍາດລະບາດ.

ໂອກາດດຽວກັນນີ້, ທ່ານ ສຸວິລັດ ພົນສຸເດດ ຍັງໄດ້ນຳເອົາເຄື່ອງນຸ່ງຫົ່ມ ແລະ ອຸປະກອນຮັບໃຊ້ຫ້ອງການຈຳນວນໜຶ່ງມອບໃຫ້ແຕ່ລະບ້ານ ລວມມູນຄ່າທັງໝົດ 1.113.000 ກີບ.

(ຄຳດີ ພົນທະລີ)

# ປະທານສະພາປະຊາຊົນແຂວງຫົວພັນ ຊຸກຍູ້ການປູກ-ການລ້ຽງ ຢູ່ 3 ເມືອງລຽບນ້ຳ



(ສພຊ) ວັນທີ 13-15 ມີນາຜ່ານມາ, ທ່ານ ນາງ ອຳໄພວອນ ລ້ອມບຸນແພງ ຮອງເລຂາພັກແຂວງ, ປະທານສະພາປະຊາຊົນແຂວງຫົວພັນ ພ້ອມດ້ວຍຄະນະທີມງານພະແນກກະສິກຳ ແລະ ປ່າໄມ້ແຂວງຫົວພັນ ໄດ້ເຄື່ອນໄຫວຊຸກຍູ້ຕິດຕາມກວດກາການປູກພືດລະດູແລ້ງ ແລະ ບັນດາກິດຈະການຂອງໂຄງການຊົນລະກະເສດ ແລະ ການຜະລິດເປັນສິນຄ້າຂະໜາດນ້ອຍຂອງກຸ່ມການຜະລິດ ຢູ່ເມືອງສົບເບົາ, ເມືອງແອດ ແລະ ເມືອງຊຽງຄໍ້ ແຂວງຫົວພັນ.

ການຊຸກຍູ້ຕິດຕາມກວດກາຄັ້ງນີ້, ແມ່ນປະຕິບັດຕາມສິດ, ພາລະບົດບາດຂອງສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງ ແລະ ແຜນການເຄື່ອນໄຫວຂອງຄະນະປະຈຳສະພາປະຊາຊົນແຂວງຫົວພັນ ໂດຍສຸມໃສ່ຊຸກຍູ້ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ດ້ວຍການນຳໃຊ້ 5 ທ່າແຮງຂອງແຂວງຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ ແລະ ການເງິນ ໃຫ້ເປັນຂະບວນການຟົດຟື້ນ, ແຂງແຮງ ເປັນຕົ້ນແມ່ນການຈັດຕັ້ງປະຕິບັດແຜນພັດທະນາຂົງເຂດກະສິກຳ ແລະ ປ່າໄມ້ ເຫັນວ່າບາງດ້ານຍັງປະເຊີນໜ້າກັບສິ່ງທ້າທາຍຫຼາຍດ້ານ ໂດຍສະເພາະລາຄາປັດໄຈການຜະລິດສູງຂຶ້ນ, ແຕ່ດ້ວຍຄວາມເປັນຫ່ວງເປັນໃຍຂອງສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ກໍຄືສະມາຊິກສະພາປະຊາຊົນແຂວງ ໄດ້ປະສານສົມທົບກັບພະແນກກະສິກຳ ແລະ ປ່າໄມ້ແຂວງລົງຊຸກຍູ້ ຕິດຕາມ, ກວດກາການຈັດຕັ້ງຜັນຂະຫຍາຍບັນດາທ່າແຮງດ້ານການປູກ-ການລ້ຽງເພື່ອໃຫ້ກາຍເປັນຮູບປະທຳ ແລະ ຜັນຂະຫຍາຍອອກສູ່ວົງກວ້າງ ສາມາດຄ້ຳປະກັນທາງດ້ານສະບຽງອາຫານໄດ້ໂດຍພື້ນຖານ ແລະ ມີສ່ວນສະສົມແຮໄວ້ຂາຍເປັນສິນຄ້າຕອບສະໜອງຕະຫຼາດຢ່າງພຽງພໍ.

ຕອນທ້າຍ, ປະທານສະພາປະຊົນແຂວງ ຍັງໄດ້ມີຄຳເຫັນໂອ້ລົມຕໍ່ພໍ່ແມ່ປະຊາຊົນຜູ້ທຳການຜະລິດ ທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຄວາມອົດທົນ, ດຸໝັ່ນຂະຫຍາຍພຽນຂອງພໍ່ແມ່ປະຊາຊົນບັນດາເຜົ່າທີ່ເປັນມູນເຊື້ອ, ເປັນເຈົ້າຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ຕາມທ່າແຮງທີ່ມີຢູ່ແລ້ວ ສຸມໃສ່ການປູກ-ການລ້ຽງ ເພື່ອຊ່ວຍໜູນຊີວິດການເປັນຢູ່ຂອງຄອບຄົວດີນັບມື້ຂຶ້ນ ແລະ ຜະລິດເປັນສິນຄ້າໂດຍສຸມໃສ່ເປັນຕົ້ນແມ່ນການລ້ຽງສັດປະເພດຕ່າງໆ, ປູກເຂົ້ານາແຊງ, ປູກຕົ້ນໄມ້ໃຫ້ໝາກ ແລະ ປູກພືດລະດູແລ້ງເປັນສິນຄ້າ ສາມາດຕອບສະໜອງຕະຫຼາດພາຍໃນເມືອງ, ແຂວງ ໄດ້ໂດຍພື້ນຖານ. ພ້ອມນີ້, ທ່ານຍັງໄດ້ຮຽກຮ້ອງ ແລະ ເນັ້ນໜັກໃຫ້ພໍ່ແມ່ປະຊາຊົນບັນດາເຜົ່າຈົ່ງພ້ອມກັນເອົາໃຈໃສ່ສືບຕໍ່ຮັກສາມູນເຊື້ອດຸໝັ່ນຂະຫຍັນພຽນ, ຕ້ອງໄດ້ສ້າງການຫັນປ່ຽນໃໝ່ຢ່າງແຂງແຮງ ແລະ ເລິກເຊິ່ງ ໃນການພັດທະນາແບບບຸກທະລຸ ບວກກັບເຕັກນິກວິທະຍາສາດເຕັກໂນໂລຊີ ໂດຍສະເພາະແມ່ນປະສານສົມທົບກັບເຕັກນິກວິຊາການທີ່ເປັນຊ່ຽວຊານ ດ້ານກະສິກຳ ແລະ ປ່າໄມ້ ໃນການຈັດຕັ້ງປະບັດຕົວຈິງໃຫ້ເກີດດອກອອກຜົນ ສາມາດຜະລິດກະສິກຳເປັນສິນຄ້າທີ່ມີຄຸນນະພາບສູງ, ມີຄວາມປອດໄພຕໍ່ສຸຂະພາບ, ມີຫຼາກຫຼາຍຜະລິດຕະພັນ ສາມາດຕອບສະໜອງຕາມຄວາມຕ້ອງການຂອງຜູ້ບໍລິໂພກຢ່າງພຽງພໍ ແລະ ສົ່ງອອກພາຍໃນ ແລະ ຕ່າງປະເທດໃຫ້ນັບມື້ຫຼາຍຂຶ້ນເລື້ອຍໆ.

(ວິນນະຄອນ)

# ສສຊ ເຂດ 17 ແຂວງອັດຕະປື ຕິດຕາມກວດກາໂຄງການລົງທຶນຢູ່ເມືອງສະໜາມໄຊ



(ສພຊ) ໃນວັນທີ 6-8 ມີນາ 2023 ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກທີ 17 ແຂວງອັດຕະປື ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນຂອງບໍລິສັດ ລາວທຽນຊື່ (ພັດທະນາໂຄງການສ້າງຕັ້ງໂຮງງານຜະລິດແປ້ງມັນຕົ້ນ), ບໍລິສັດເຈ່ຍລັນ (ພັດທະນາກະສິກຳ), ບໍລິສັດຄຳແສນ (ພັດທະນາກະສິກຳ) ແລະ ບໍລິສັດພັດທະນາໂຄງການເຂື່ອນໄຟຟ້າເຊກອງຕອນລຸ່ມເອ ຢູ່ເມືອງສະໜາມໄຊ ເຊິ່ງນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອຕັ້ງທີ 17 ແຂວງອັດຕະປື, ປະທານສະພາປະຊາຊົນແຂວງ (ສພຂ); ມີທ່ານ ມະນີໂສ ຊາມົນຕີ ຮອງປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ສະພາແຫ່ງຊາດທັງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 17 ແລະ ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງທີ 17 ພ້ອມດ້ວຍຄະນະສົມທົບກັບຂະແໜງການທີ່ກ່ຽວຂ້ອງ ແລະ ມີຜູ້ຕາງໜ້າຈາກບໍລິສັດດັ່ງກ່າວ.

ທັງນີ້, ເພື່ອເກັບກຳປົກສາຫາລື, ຂໍ້ສະດວກ, ຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍ, ຜົນກະທົບຕໍ່ປະຊາຊົນ ແລະ ສິ່ງແວດລ້ອມ, ທຳມະຊາດ-ສັງຄົມ ແລະ ບັນຫາອື່ນໆ ທີ່ອາດຈະເກີດຂຶ້ນຈາກການພັດທະນາຂອງໂຄງການ, ເພື່ອຮັບປະກັນໃຫ້ແຕ່ລະໂຄງການດຳເນີນໄປດ້ວຍຄວາມຖືກຕ້ອງ ຕາມຂັ້ນຕອນ, ຫຼັກການບົນພື້ນຖານລະບຽບກົດໝາຍ, ຮັກສາສິດຜົນປະໂຫຍດພາກລັດ, ໂຄງການ ແລະ ປະຊາຊົນ ໃຫ້ສົມເຫດ, ສົມຜົນ ມີຄວາມໂປ່ງໃສ ແລະ ສາມາດກວດສອບໄດ້ ໃນແຕ່ລະໄລຍະຂອງການພັດທະນາໂຄງການ ແນໃສ່ສ້າງຄວາມເປັນເອກະພາບສູງໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແລະ ເພື່ອເຮັດໃຫ້ທົ່ວສັງຄົມມີສະຕິເຄົາລົບ, ປະຕິບັດລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍໃຫ້ສູງຂຶ້ນເຮັດໃຫ້ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມດ້ວຍກົດໝາຍມີຄວາມເຂັ້ມງວດ ແລະ ສັກສິດກວ່າເກົ່າ, ເພື່ອເປັນຂໍ້ມູນໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະກຳມະການ ຂອງສະພາປະຊາຊົນແຂວງ ແລະ ກຳມາທິການຂອງສະພາແຫ່ງຊາດ ໃນການຈັດຕັ້ງປະຕິບັດວຽກງານໃນຕໍ່ໜ້າ.

(ວິນັດ)

# ສຳມະນາຮ່າງບົດລາຍງານການເມືອງ ຕິດພັນກັບການທາບທາມບຸກຄະລາກອນ ຮອບ 2



(ສພຊ) ວັນທີ 16 ມີນາ 2023 ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສາລະວັນ, ກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ໄດ້ເປີດກອງປະຊຸມສຳມະນາຮ່າງບົດລາຍງານການເມືອງ ຕິດພັນກັບການທາບທາມບຸກຄະລາກອນ ຮອບ 2 ຕໍ່ກອງປະຊຸມໃຫຍ່ ຄັ້ງທີ VII ຂອງກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ໂດຍການເປັນປະທານກອງປະຊຸມຂອງສະຫາຍ ພັທ. ນາງ ທອງເຫຼືອງ ໂຄດປັນຍາ ປະທານກຳມະບານຮາກຖານ ສະພາປະຊາຊົນແຂວງສາລະວັນ; ເຂົ້າຮ່ວມມີສະຫາຍ ສົມພອນ ແສງສຸລິຈັນ ຮອງເລຂາຄະນະພັກຮາກຖານສະພາປະຊາຊົນແຂວງ, ມີຄະນະພັກຮາກຖານ, ຄະນະກຳມະບານຮາກຖານ, ຕາງໜ້າຈາກສະຫະພັນກຳມະບານແຂວງສາລະວັນ ພ້ອມດ້ວຍບັນດາສະຫາຍສະມາຊິກກຳມະບານຮາກຖານພາຍໃນສະພາປະຊາຊົນແຂວງສາລະວັນ.

ທັງນີ້, ກໍເພື່ອຄົ້ນຄວ້າປຶກສາຫາລືເປັນເອກະພາບດ້ານເນື້ອໃນເອກະສານຮ່າງບົດສຳຫຼວດການນຳພາ, ຮ່າງບົດລາຍງານການເມືອງ, ມະຕິກອງປະຊຸມ ແລະ ວາລະກອງປະຊຸມໃຫຍ່ ຄັ້ງທີ VII ຂອງກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ແລະ ອື່ນໆ; ແນໃສ່ຮັບປະກັນໃຫ້ເນື້ອໃນມີຄວາມຖືກຕ້ອງ ແລະ ຄົບຖ້ວນ ກະກຽມທີ່ຈະນຳເຂົ້າ ແລະ ຮັບຮອງເອົາກອງປະຊຸມໃຫຍ່ ຄັ້ງທີ VII ຂອງກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ທີ່ຈະເປີດຂຶ້ນໃນໄວໆນີ້.

ໃນວາລະຂອງກອງປະຊຸມ, ໄດ້ຮັບຟັງການຜ່ານຮ່າງບົດສຳຫຼວດການນຳພາ ແລະ ຮ່າງບົດລາຍງານການເມືອງຂອງກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ຈາກຄະນະຮັບຜິດຊອບ; ຈາກນັ້ນ, ບັນດາຜູ້ແທນກອງປະຊຸມ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນເຂົ້າໃສ່ສອງບົດດັ່ງກ່າວ ດ້ວຍບັນຍາກາດຟົດຟື້ນ ແລະ ເປັນເຈົ້າການທີ່ຕິດພັນກັບໜ້າທີ່ວຽກງານການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 5 ເປັນເຈົ້າວາງອອກ ໂດຍສະເພາະບາງເນື້ອໃນ, ຄຳສັບທີ່ເຫັນວ່າຍັງບໍ່ທັນຖືກຕ້ອງ ແລະ ບໍ່ທັນເຫດເໝາະກັບສະພາບຕົວຈິງ.

ໂອກາດດຽວກັນ, ສະຫາຍ ສົມພອນ ແສງສຸລິຈັນ ໄດ້ມີຄຳເຫັນ ແລະ ໃຫ້ທິດຊີ້ນຳຕໍ່ກອງປະຊຸມວ່າ: ຜ່ານການຄົ້ນຄວ້າດ້ານເນື້ອໃນຂອງກອງປະຊຸມໃນຄັ້ງນີ້ ເຫັນວ່າມີຄວາມເປັນເອກະພາບສູງ ດັ່ງນັ້ນ, ຈຶ່ງມອບໃຫ້ຄະນະຮັບຜິດຊອບສືບຕໍ່ນຳເອົາເນື້ອໃນຈິດໃຈຂອງກອງປະຊຸມຄັ້ງນີ້ ນຳໄປຈັດຕັ້ງປະຕິບັດສືບຕໍ່ປັບປຸງຕື່ມເຂົ້າ, ຕັດອອກ, ແກ້ໄຂບາງຄຳສັບ ພ້ອມກວດກາເອກະສານຮອບດ້ານໃຫ້ມີຄວາມພ້ອມ ແລະ ສຳເລັດ ແລ້ວສະເໜີສະຫະພັນກຳມະບານແຂວງເພື່ອຂໍອະນຸມັດ ເປີດກອງປະຊຸມໃຫຍ່ຄັ້ງທີ VII ຂອງກຳມະບານຮາກຖານ ສະພາປະຊາຊົນແຂວງສາລະວັນ ໂດຍໄວ.

ຕອນທ້າຍກອງປະຊຸມ ຍັງໄດ້ຈັດພິທີປ່ອນບັດລົງຄະແນນສຽງ ທາບທາມ ຄັ້ງທີ 2 ເພື່ອຄັດເລືອກເອົາຜູ້ສະໝັກ ຜູ້ທີ່ມີມາດຖານເງື່ອນໄຂຄົບຖ້ວນ ເຂົ້າໂຄງປະກອບ, ບຸກຄະລາກອນຂອງຄະນະກຳມະບານຮາກຖານສະພາປະຊາຊົນແຂວງສາລະວັນ ຊຸດໃໝ່.

(ດີລຳພົນ ພົມມະຈັນ)

# ຜັນຂະຫຍາຍຜົນສຳເລັດ ກອງປະຊຸມສະໄໝສາມັນເທື່ອທີ່ 4 ເມືອງດາກຈຶງ



(ສພຊ) ນັບແຕ່ວັນທີ 14-19 ມີນາ 2023 ບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ແລະ ສະມາຊິກສະພາປະຊາຊົນແຂວງ (ສສຂ) ໄດ້ເຄື່ອນໄຫວພົບປະຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເຊິ່ງນຳໂດຍທ່ານ ປອ. ແພງສີ ສີລາວີ ຮອງປະທານສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16, ຮອງປະທານສະພາປະຊາຊົນແຂວງ ພ້ອມດ້ວຍທ່ານ ພັຕ. ບຸນທະວີໃສ ພົມມະວົງສາ ແລະ ທ່ານ ແສງໂນວົງ ສີຈະເລີນ ສສຂ ປະຈຳເຂດເລືອກຕັ້ງເມືອງດາກຈຶງ.

ການເຄື່ອນໄຫວພົບປະຄັ້ງນີ້ ແມ່ນໄດ້ເຄື່ອນໄຫວ 6 ບ້ານຄື: ຕັງໂບຮງ, ດາກຈຶງ, ງອນດອນ, ດາກມີ, ໂນນສະຫວ່າງ ແລະ ດາກບົງ; ເພື່ອໃຫ້ໄດ້ຂໍ້ມູນຂອງບ້ານ ກໍຄືວິຖີຊີວິດຂອງພໍ່ແມ່ປະຊາຊົນທາງຄະນະກໍໄດ້ຮັບຟັງການລາຍງານໂດຍຫຍໍ້ຈາກຄະນະບ້ານ; ໂດຍບັນຫາທີ່ພົບພໍ້ຫຼັກໆໃນແຕ່ລະບ້ານແມ່ນດ້ານການສະໜອງນ້ຳໃຊ້ນ້ຳດື່ມບໍ່ພຽງພໍ, ບັນຫາດ້ານການຜະລິດການກະສິກຳ (ພື້ນທີ່ການຜະລິດຫຼາຍແຕ່ຜົນໄດ້ຮັບໜ້ອຍ), ການສະໜອງດ້ານສາທາລະນະສຸກ ເປັນຕົ້ນແມ່ນຢາຍັງບໍ່ພຽງພໍ (ມີໂຮງໝໍນ້ອຍແຕ່ບໍ່ມີຢາ), ບາງບ້ານຍັງບໍ່ມີຫ້ອງການບ້ານ; ຈາກບັນຫາທີ່ພົບເຫັນບັນດາທ່ານ ສສຊ ແລະ ສສຂ ກໍໄດ້ຮັບເອົາເພື່ອນຳໄປພິຈາລະນາແກ້ໄຂໃນຕໍ່ໜ້າ. ພາຍຫຼັງຮັບຟັງການລາຍງານແລ້ວ ສສຊ-ສສຂ ກໍໄດ້ຜ່ານບັນດາເນື້ອໃນເອກະສານມະຕິຕ່າງໆທີ່ໄດ້ຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II; ພ້ອມນັ້ນ, ທ່ານ ປອ. ແພງສີ ສີລາວີ ຍັງໄດ້ໃຫ້ຄຳໂອ້ລົມຕໍ່ຄະນະບ້ານ-ພໍ່ແມ່ປະຊາຊົນ ໂດຍໄດ້ເນັ້ນໃຫ້ກຳແໜ້ນຕໍ່ກັບບັນດາມະຕິຮັບຮອງຕ່າງໆຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ທັງຮຽກຮ້ອງໃຫ້ພໍ່ແມ່ປະຊາຊົນເຊື່ອໝັ້ນເຂົ້າໃຈຕໍ່ເຈດຈຳນົງການຈັດຕັ້ງປະຕິບັດຂອງຄະນະນຳຂັ້ນເທິງໃຫ້ເລິກເຊິ່ງຂຶ້ນຕື່ມ.

ໂອກາດດັ່ງກ່າວ, ທ່ານ ປອ. ແພງສີ ສີລາວີ ພ້ອມດ້ວຍ ສສຂ ກໍໄດ້ມອບເຄື່ອງອຸປະໂພກ-ບໍລິໂພກ ເປັນຕົ້ນແມ່ນເຂົ້າສານ, ອຸປະກອນການຮຽນມີ: ປຶ້ມ-ບິກ, ອຸປະກອນກິລາມີ: ບານເຕະ-ບານສົ່ງ-ກະຕໍ້ຫວາຍ; ໃຫ້ແກ່ຄະນະບ້ານ-ພໍ່ແມ່ປະຊາຊົນອີກດ້ວຍ.

(ນາງ ສຸກກະສັນ ບົວລະພາ)



# ບາງຜົນງານທີ່ພົ້ນເດັ່ນຂອງ ສພຂ ບໍລິຄຳໄຊ

ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 3 ຫາເທື່ອທີ 4 ຂອງຄະນະສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 11 ແຂວງບໍລິຄຳໄຊ ກໍຄືສະມາຊິກສະພາປະຊາຊົນແຂວງ (ສສຂ) ບໍລິຄຳໄຊ ສາມາດຍາດໄດ້ຜົນງານທີ່ພົ້ນເດັ່ນຫຼາຍດ້ານ ເຊິ່ງທ່ານ ເລື່ອນວິໄລ ຈັນທະລາພັນ ຮອງປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ ທັງເປັນຮອງປະທານສະພາປະຊາຊົນແຂວງ (ສພຂ) ບໍລິຄຳໄຊ ໄດ້ເປີດເຜີຍຜ່ານການສຳພາດຂອງສື່ມວນຊົນ ໃນໂອກາດທີ່ເຂົ້າຮ່ວມກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ (ສພຊ) ໂດຍທ່ານໃຫ້ຮູ້ວ່າ:



1. ການປະຕິບັດພາລະບົດບາດດ້ານນິຕິບັນຍັດ ໄດ້ເຂົ້າຮ່ວມກອງປະຊຸມທາບທາມ ແລະ ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 6 ຄັ້ງ ໃນນີ້ ເຂົ້າຮ່ວມກອງປະຊຸມທາບທາມໃນຮູບແບບທາງໄກ 2 ຄັ້ງ ເຊິ່ງລວມມີ 19 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງອາວຸດ ແລະ ວັດຖຸລະເບີດ; ຮ່າງກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ; ຮ່າງກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ; ຮ່າງກົດໝາຍວ່າດ້ວຍການສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດໜ້ອຍ ແລະ ກາງ; ຮ່າງກົດໝາຍວ່າດ້ວຍໜັງສືຜ່ານແດນ; ຮ່າງກົດໝາຍວ່າດ້ວຍການຄົມມະນາຄົມທາງນ້ຳ; ຮ່າງກົດໝາຍວ່າດ້ວຍຫໍພິພິທະພັນ; ກົດໝາຍວ່າດ້ວຍທະນາຍຄວາມ; ກົດໝາຍວ່າດ້ວຍທະບຽນສານ; ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່; ກົດໝາຍວ່າດ້ວຍວິສາຫະກິດ; ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ; ກົດໝາຍວ່າດ້ວຍອົງການໄອຍະການທະຫານ; ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ; ກົດໝາຍວ່າດ້ວຍການກວດສອບແຫ່ງລັດ; ກົດໝາຍວ່າດ້ວຍການກວດກາລັດ; ຮ່າງກົດໝາຍວ່າດ້ວຍການແກ້ໄຂຄຳຮ້ອງທຸກ; ຮ່າງກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ; ຮ່າງກົດໝາຍວ່າດ້ວຍຄວາມປອດໄພຂອງເຂື່ອນ ແລະ ຮ່າງກົດໝາຍວ່າດ້ວຍວິຈິດສິນ; ເຂົ້າຮ່ວມຕິດຕາມກວດກາ ແລະ ຈັດຕັ້ງປະເມີນການປະຕິບັດກົດໝາຍຈຳນວນ 2 ຄັ້ງ, ມີ 4 ສະບັບ ແລ້ວລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍສົ່ງໃຫ້ສະພາແຫ່ງຊາດ ມີຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ເຂົ້າຮ່ວມຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນ ໃນການສ້າງ ແລະ ປັບປຸງນິຕິກຳຂັ້ນແຂວງ ໄດ້ 10 ສະບັບ ແລະ ໄດ້ອອກມະຕິຮັບຮອງເອົານິຕິກຳຂັ້ນແຂວງ ໄດ້ 6 ສະບັບ ຄື: ຂໍ້ຕົກລົງຂອງ ເຈົ້າແຂວງ ວ່າດ້ວຍນະໂຍບາຍ ແລະ ຫົວໜ່ວຍທົດແທນຄ່າເສຍຫາຍໃຫ້ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນ້ຳຖ້ວມເທດສະບານເມືອງປາກຊັນ; ຂໍ້ຕົກລົງວ່າດ້ວຍການມີສ່ວນຮ່ວມຂອງສັງຄົມໃນວຽກງານການສຶກສາ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການກຳນົດລະບຽບການປັບໃໝ ແລະ ນຳໃຊ້ມາດຕະການອື່ນ ຕໍ່ຜູ້ລະເມີດກົດໝາຍ ແລະ ລະບຽບກ່ຽວກັບສິ່ງແວດລ້ອມ; ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງການລົງທຶນດ້ານກະສິກຳ ຕາມຮູບແບບສັນຍາ (ສະບັບປັບປຸງ); ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງ, ປົກປັກຮັກສາປ່າສະຫງວນຫ້ວຍງິວ ແລະ ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງລັດທິ-ສິ່ງນັກຮຽນ.

2. ການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງຊາດ ແລະ ຂອງທ້ອງຖິ່ນ ໄດ້ເປັນເຈົ້າການໃນການຄົ້ນຄວ້າ, ປະກອບຄຳເຫັນ ແລະ ພິຈາລະນາບັນຫາສຳຄັນພື້ນຖານຂອງຊາດໃນກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ແລະ ບັນຫາສຳຄັນອື່ນໆ ດ້ວຍຄວາມຮັບຜິດຊອບສູງ.

3. ການປະຕິບັດພາລະບົດບາດ ຕິດຕາມກວດກາລົງຊຸກຍູ້ ແລະ ຕິດຕາມກວດກາກ່ຽວກັບວຽກງານການເກັບລາຍຮັບງົບປະມານແຫ່ງລັດ ເປັນຕົ້ນແມ່ນການເກັບລາຍຮັບຈາກພາສີທີ່ດິນ ແລະ ການເກັບລາຍຮັບຈາກການຂຸດຄົ້ນ ແລະ ສົ່ງອອກແຮ່ທາດ; ຕິດຕາມກວດກາເນື້ອທີ່ດິນປ່າໄມ້ທຳມະຊາດ ຫັນປ່ຽນເປັນດິນປ້ອງກັນຊາດ ນຳໃຊ້ສ້າງຕັ້ງຄ້າຍກອງພັນໃຫຍ່ 621 ແລະ ສະໜາມທັດແອບຂັ້ນຍຸດທະບັ້ນຮົບຍິງລູກສອນໄຟ SR5 ຢູ່ແຂວງບໍລິຄຳໄຊ ຂອງສະພາແຫ່ງຊາດ; ເຄື່ອນໄຫວຕິດຕາມກວດກາ ແລະ ຊຸກຍູ້ວຽກງານສົ່ງເສີມການຜະລິດເປັນສິນຄ້າ, ຕິດພັນກັບການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນຂອງແຂວງບໍລິຄຳໄຊ ທີ່ເມືອງບໍລິຄັນ; ເຄື່ອນໄຫວຕິດຕາມ-ກວດກາ ການເກັບພາສີທີ່ດິນຢູ່ບ້ານສີສະອາດ ເມືອງປາກຊັນ ແຂວງບໍລິຄຳໄຊ; ເຂົ້າຮ່ວມລົງກວດກາຜົນສຳເລັດໂຄງການຂຸດນ້ຳສ້າງ, ຕິດຕັ້ງສະໂຕໂດ່, ວາງທໍ່ ແລະ ຕິດຕັ້ງກົງເຕີນ້ຳບ້ານແຈ້ງສະຫວ່າງ ເມືອງຄຳເກີດ ໂດຍນຳໃຊ້ຮ່ວງເງິນພັດທະນາຊຸມຊົນຂອງບໍລິສັດ ບໍ່ຄຳ-ຄຳເກີດ ແສນອຸດົມຈຳກັດ; ປະຊຸມປຶກສາຫາລືແກ້ໄຂບັນຫາຕາມການຕິດຕາມກວດກາຊຸກຍູ້ວຽກງານສຳຫຼວດ, ການຊອກຄົ້ນ ແລະ ຂຸດແຮ່ທາດ ແລະ ວຽກງານເຊົ່າສຳປະທານທີ່ດິນພາຍໃນແຂວງ ແລະ ການສົ່ງແຮ່ເຫຼັກ; ເຂົ້າຮ່ວມກອງປະຊຸມຕິດຕາມກວດກາການເຄື່ອນໄຫວວຽກງານຂອງຄະນະ ສສຊ ປະຈຳເຂດເລືອກຕັ້ງ ຮ່ວມກັບກຳມາທິການວຽກງານ ສສຊ ນຳໂດຍຮອງປະທານກຳມາທິການວຽກງານ ສສຊ; ເຂົ້າຮ່ວມຊຸກຍູ້ ແລະ ຕິດຕາມກວດກາການກະກຽມເອກະສານເພື່ອເບີກຈ່າຍເງິນຊົດເຊີຍ ແລະ ປຶກສາຫາລືກັບຜູ້ທີ່ໄດ້ຮັບຜົນກະທົບຂອງໂຄງການກັນເຈື່ອນໃຫ້ແກ່ໂຄງການກໍ່ສ້າງຕາຝັ່ງຕ້ານເຈື່ອນຕົວເມືອງປາກຊັນ ໂຄງການພັດທະນາຕົວເມືອງຕາມແລວທາງອະນຸພາກພື້ນແມ່ນ້ຳຂອງ 4 ແລະ ເຂົ້າຮ່ວມກອງປະຊຸມປຶກສາຫາລືຜົນການເຮັດບົດບັນທຶກຮັບຄ່າທົດແທນ ແລະ ສະເໜີບັນຫາທີ່ພົບເຫັນໃນການຈັດຕັ້ງປະຕິບັດວຽກງານໂຄງການກັນເຈື່ອນ; ນອກນັ້ນ, ສສຊ ປະຈຳເຂດເລືອກຕັ້ງ, ສສຂ ຍັງໄດ້ເຄື່ອນໄຫວຕິດຕາມກວດກາບັນຫາພົ້ນເດັ່ນຕິດພັນກັບຄຳສະເໜີຂອງປະຊາຊົນ ເປັນຕົ້ນການຈັດຕັ້ງປະຕິບັດວຽກງານຂຸດຄົ້ນແຮ່ຂອງບໍລິສັດ ຄາວິໂກ່ ຈຳກັດ ຢູ່ເມືອງບໍລິຄັນ, ໂຄງການລ້ຽງສັດໃຫຍ່, ໂຮງງານຫຼອມໂລຫະ, ການປູກພືດກະສິກຳສະອາດ, ການຜະລິດເຂົ້າເປັນສິນຄ້າ ຢູ່ເມືອງທ່າພະບາດ ແລະ ອື່ນໆ.

ນອກຈາກປະຕິບັດຕາມ 3 ພາລະບົດບາດແລ້ວ ສພຂ ຍັງໄດ້ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຄົ້ນຄວ້າປະກອບຄຳເຫັນຕໍ່ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນ ຈຳນວນທັງໝົດ 28 ເລື່ອງ, ຄ້າງມາ 2 ເລື່ອງ ລວມທັງໝົດ 30 ເລື່ອງ ໃນນີ້, ເປັນຄຳຮ້ອງຂໍຄວາມເປັນທຳ 13 ເລື່ອງ, ຄຳສະເໜີ 17, ຄົ້ນຄວ້າສຳເລັດແລ້ວ 28 ເລື່ອງ, ກຳລັງຄົ້ນຄວ້າ 2 ເລື່ອງ, ບັນຫາພົ້ນເດັ່ນທີ່ປະຊາຊົນໄດ້ຮ້ອງຂໍຄວາມເປັນທຳ ສ່ວນຫຼາຍແມ່ນກ່ຽວກັບຂໍ້ຂັດແຍ່ງທີ່ດິນ ແລະ ບໍ່ພໍໃຈຕໍ່ການຈັດຕັ້ງປະຕິບັດຄຳຕັດສິນຂອງສານທີ່ໃຊ້ໄດ້ເດັດຂາດແລ້ວ ທັງໄດ້ຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍໃຫ້ແກ່ປະຊາຊົນ ຈຳນວນ 20 ຄັ້ງ, 42 ຄົນ ຍິງ 11 ຄົນ ພົ້ນເດັ່ນແມ່ນຂໍ້ຂັດແຍ່ງກ່ຽວກັບທີ່ດິນ ແລະ ບໍ່ພໍໃຈຕໍ່ກັບການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ບັນຫາອື່ນໆ.

ທ່ານ ປອ. ສຸວັນນີ ໄຊຊະນະ ຍັງໃຫ້ຮູ້ຕື່ມວ່າ: ວຽກງານສ້າງຄວາມເຂັ້ມແຂງ ໄດ້ຈັດຝຶກອົບຮົມສຳມະນາສ້າງຄວາມເຂັ້ມແຂງໃຫ້ແກ່ ສສຊ, ສສຂ ແລະ ພະນັກງານ ທີ່ເປັນເສນາທິການໃນຫຼາຍຫົວຂໍ້ ເປັນຕົ້ນແມ່ນການສ້າງ ແລະ ປັບປຸງນິຕິກຳຂັ້ນແຂວງ; ສຳມະນາເພື່ອຍົກລະດັບ ກ່ຽວກັບການວິເຄາະເນື້ອໃນຂອງຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ພະນັກງານສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ; ຈັດຝຶກອົບຮົມໃນຫົວຂໍ້ກ່ຽວກັບບົດຮຽນການຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດສັງຄົມ ແລະ ທັກສະການລົງພົບປະ-ປະຊາຊົນໃຫ້ແກ່ ສສຊ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ; ເຂົ້າຮ່ວມກອງປະຊຸມສຳມະນາໃນຫົວຂໍ້ຕ່າງໆ, ກອງປະຊຸມຄົບຄະນະຂອງກຳມາທິການຕາມແຈ້ງເຊີນຂອງສະພາແຫ່ງຊາດ ແລະ ຂອງແຂວງຈັດຂຶ້ນ.

ສຳລັບການເຄື່ອນໄຫວວຽກງານການຕ່າງປະເທດ ເຊິ່ງການເຂົ້າຮ່ວມກອງປະຊຸມສຳມະນາທັດສະນະສຶກສາຢ້ຽມຢາມ ແລະ ຖອດຖອນບົດຮຽນ ໄດ້ຮ່ວມກັບຜູ້ແທນຂັ້ນສູງຂອງ ສພຊ ພົບປະແລກປ່ຽນບົດຮຽນ ລະຫວ່າງປະທານ ສພຊ ສປປລາວ ກັບຄະນະຜູ້ແທນສະພາແຫ່ງຊາດ ສສ.ຫວຽດນາມ; ເຂົ້າຮ່ວມພິທີສະເຫຼີມສະຫຼອງ 2 ວັນປະຫວັດສາດ ຄື: ວັນສ້າງຕັ້ງສາຍພົວພັນການທູດ ຄົບຮອບ 60 ປີ, ວັນເຊັນສົນທິສັນຍາມິດຕະພາບ ແລະ ການຮ່ວມມືລາວ-ຫວຽດນາມ ຄົບຮອບ 45 ປີ ຢູ່ ສສ.ຫວຽດນາມ; ພ້ອມນັ້ນ, ຍັງໄດ້ຮັບຕ້ອນຄະນະຜູ້ແທນ ແລະ ການເຂົ້າຮ່ວມກອງປະຊຸມພາຍໃນ, ເຂົ້າຮ່ວມວາງພວງມາລາ ແລະ ມອບກະຕ່າອວຍພອນ ໃນງານມອບ-ຮັບອັດຖິທະຫານອາສາສະໝັກ ແລະ ຊ່ຽວຊານຫວຽດນາມທີ່ເສຍຊີວິດໃນປາງສົງຄາມຢູ່ແຂວງບໍລິຄຳໄຊ ກັບຄືນປະເທດ, ຮັບຕ້ອນ ແລະ ເປີດກອງປະຊຸມພົບປະການນຳຂັ້ນສູງ ລະຫວ່າງຄະນະຜູ້ແທນແຂວງບໍລິຄຳໄຊ ກັບຄະນະຜູ້ແທນແຂວງເລີມດົງ, ຮັບຕ້ອນ ແລະ ເປີດກອງປະຊຸມພົບປະການນຳຂັ້ນສູງ ລະຫວ່າງຄະນະຜູ້ແທນແຂວງບໍລິຄຳໄຊ ກັບຄະນະຜູ້ແທນແຂວງບາກລຽວ.

ພົ້ນເດັ່ນ ສພຂ ບໍລິຄຳໄຊ ໄດ້ດຳເນີນກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັບ ສພຂ ຮ່າຕິ້ງ ສສ.ຫວຽດນາມ ປະຈຳປີ 2022 ແລະ ຍັງໄດ້ມີພິທີເຊັນບົດບັນທຶກຊ່ວຍເຫຼືອເຊິ່ງກັນແລະກັນ.



ພາບປະກອບ




ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ ເລກທີ 15 /ສພຊ
ນະຄອນຫຼວງວຽງຈັນ, ວັນທີ 7 ກໍລະກົດ 2022

**ກົດໝາຍ**
**ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ**
**(ສະບັບປັບປຸງ)**

**ພາກທີ I**
**ບົດບັນຍັດທົ່ວໄປ**

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງເງິນຕາຕ່າງ ປະເທດ ເພື່ອຊຸກຍູ້ສົ່ງເສີມການຈໍລະຈອນເງິນຕາ, ການຄ້າ, ການບໍລິການ, ການລົງທຶນໃຫ້ມີປະສິດທິພາບ, ປະສິດທິຜົນ, ສ້າງຄວາມເຂັ້ມແຂງຖານະການຊໍາລະກັບຕ່າງປະເທດ ແລະ ຄັງສຳຮອງເງິນຕາຕ່າງປະເທດ ແນໃສ່ຍົກສູງຄຸນຄ່າ ແລະ ຮັກສາສະຖຽນລະພາບຂອງເງິນຕາແຫ່ງຊາດ, ເປີດກວ້າງການພົວພັນຮ່ວມມືເສດຖະກິດກັບຕ່າງປະເທດ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

**ມາດຕາ 2 (ປັບປຸງ) ການຄຸ້ມຄອງເງິນຕາຕ່າງປະເທດ**

ການຄຸ້ມຄອງເງິນຕາຕ່າງປະເທດ ແມ່ນການຈັດຕັ້ງປະຕິບັດບັນດາ ຫຼັກການ, ລະບຽບການ ແລະ ມາດຕະການກ່ຽວກັບເງິນຕາຕ່າງປະເທດ ແລະ ຄຳ ຂອງຜູ້ມີ ແລະ/ຫຼື ບໍ່ມີພູມລຳເນົາ ຢູ່ ສປປລາວ ໃນການຄອບຄອງ, ການນຳໃຊ້; ການຊໍາລະກັບຕ່າງປະເທດກ່ຽວກັບ ການຄ້າ, ການບໍລິການ, ການຊ່ວຍເຫຼືອລ້າ, ການລົງທຶນ, ການກູ້ຢືມ, ການຝາກເງິນ ແລະ ການນຳເງິນສົດເຂົ້າ-ອອກ ສປປລາວ.

**ມາດຕາ 3 (ປັບປຸງ) ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. ເງິນຕາ ໝາຍເຖິງ ສະກຸນເງິນກີບ ແລະ ສະກຸນເງິນຕາຕ່າງປະເທດ ໃນຮູບແບບເງິນຫຼຽນ, ທະນະບັດ, ເອເລັກໂຕຣນິກ ຫຼື ດິຈິຕອນ;

2. ເງິນຕາຕ່າງປະເທດ ໝາຍເຖິງ ເງິນຕາສະກຸນອື່ນທີ່ຮັບຮູ້ ແລະ ນຳໃຊ້ຢ່າງເປັນທາງການຕາມກົດໝາຍຂອງເຂດປົກຄອງ, ປະເທດ ແລະ ພາກພື້ນທີ່ກ່ຽວຂ້ອງ;

3. ຄຳ ໝາຍເຖິງ ຄຳແທ່ງ, ຄຳເມັດ ແລະ ຄຳຮູບແບບອື່ນທີ່ສາກົນນຳໃຊ້ເປັນເຄື່ອງມືຊໍາລະລະຫວ່າງປະເທດ;

4. ການລົງທຶນ ໝາຍເຖິງ ການລົງທຶນໂດຍກົງ ແລະ ການລົງທຶນໃນຫຼັກຊັບ;

5. ອັດຕາແລກປ່ຽນ ໝາຍເຖິງຄ່າຂອງເງິນສະກຸນໜຶ່ງທຽບໃສ່ຄ່າຂອງເງິນສະກຸນອື່ນ;

6. ການຄອບຄອງ ໝາຍເຖິງ ການຮັກສາເງິນຕາໄວ້ໃນຮູບແບບ ເງິນສົດ, ເງິນໃນບັນຊີ ແລະ ເງິນໃນຮູບແບບອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປລາວ;

7. ຜູ້ມີພູມລຳເນົາ ຢູ່ ສປປລາວ ໝາຍເຖິງ:

- ພົນລະເມືອງລາວ ທີ່ຢູ່ ສປປລາວ;
- ພົນລະເມືອງລາວ ທີ່ໄປສຶກສາ, ທ່ອງທ່ຽວ, ຢ້ຽມຢາມ ແລະ ປິ່ນປົວສຸຂະພາບ ຢູ່ຕ່າງປະເທດ;
- ພົນລະເມືອງລາວ ທີ່ໄປຢູ່ຕ່າງປະເທດ ບໍ່ເກີນ ໜຶ່ງປີ ຍົກເວັ້ນ ເຈົ້າໜ້າທີ່ ຫຼື ພະນັກງານລາວທີ່ປະຈຳຢູ່ສຳນັກງານຜູ້ຕາງໜ້າແຫ່ງ ສປປລາວ ຢູ່ຕ່າງປະເທດ;
- ອົງການຈັດຕັ້ງຂອງລັດ ແລະ ອົງການຈັດຕັ້ງສັງຄົມຂອງ ສປປລາວ ທີ່ເຄື່ອນໄຫວຢູ່ພາຍໃນ ແລະ ຕ່າງປະເທດ;
- ບຸກຄົນ, ນິຕິບຸກຄົນລາວ ຫຼື ຕ່າງປະເທດ ທີ່ຢູ່ ສປປລາວ ຊຶ່ງໄດ້ຮັບອະນຸຍາດດຳເນີນທຸລະກິດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍຂອງ ສປປລາວ ລວມທັງຫ້ອງການຕົວແທນຂອງນິຕິບຸກຄົນດັ່ງກ່າວ ທີ່ຕັ້ງຢູ່ຕ່າງປະເທດ ບໍ່ເກີນໜຶ່ງປີ;

ອ່ານຕໍ່ສະບັບໜ້າ...




# ຍັງຊົງຈຳ

**ເນື່ອງໃນໂອກາດ ທ່ານ ກິນົມ ພົນເສນາ ຖືກຄາຕະກຳ ຄົບຮອບ 60 ປີ (1/4/1963-1/4/2023)**

**# ໂດຍ: ກົງໃຈ ແສງອຳພັນ**

✳ 1 ເມສາຈາລຶກໄວ້ ເຫດການໃຫຍ່ສຳຄັນ
ພັນເກົ້າຮ້ອຍຫົກສິບສາມ ພວກເລວຊາມສັງຫານຂ້າ
ທ່ານ ກິນົມ ພົນເສນາ ສິ້ນ ຊີວາຈາກລາໂລກ
ປວງຊົນໂສກອັ່ງແຄ້ນ ລະທົມເສົ້າທົ່ວນະຄອນ

✳ ຢ້ອນກັບໄປເມື່ອຄັ້ງ ຄາວກ່ອນຕອນເຍົາໄວ
ທ່ານປຽບເໝືອນທວນໄຟ ສ່ອງເຍືອງແຍງແຈ້ງ
ເປັນແວ່ນແຍງເຍືອງໃຫ້ ປວງຊົນລາວນ້ອຍໃຫຍ່
ເດີນໄຕ່ຕາມສູ່ລຸ້ນ
ຫຼາຍຮຸ່ນຄົນຍົກຍ້ອງ ຍໍເວົ້າກ່າວຊົມ ທ່ານແລ້ວ!

✳ ສົມວ່າເປັນຜູ່ກ້າ ອາສາເຫື່ອແຮງສະໝອງ
ປຸກລະດົມປອງດອງ ຕອບຕີມານຮ້າຍ
ເລີຍກາຍເປັນໜາມສ້ຽນ ຂອງສັດຕູຜູ້ກົດຂີ່
ພວກມັນ ຊອກວິທີຈອບຈ້າງ ທຳລາຍມ້າງຊູ່ເຂັນ

✳ ແຕ່ ດ້ວຍໃຈມຸ່ງໝັ້ນ ຮັກຊາດແພງປະຊາ
ທ່ານ ກິນົມ ພົນເສນາ ບໍ່ຫຼົງຄາລົມເຢົ້າ
ບໍ່ຍອມເອົາເງິນກ້ອນ ຂອງສັດຕູມາຍໍຍື່ນ
ຄືນໜຶ່ງ ເລີຍຖືກລອບສັງຫານຢ່າງໂຫດຫ້ຽມ ໂລກາກ້ອງກ່າວຕະລຶງ

✳ ຈຶ່ງຂໍນົບນອບນ້ອມ ຖະແຫຼງຈື່ຈຳຈົດ
ເປັນບົດຮຽນສອນໃຈ ສືບໄປຂານເວົ້າ
ຈະນຳເອົາຄວາມຮູ້ ເສຍສະຫຼະເດັດດ່ຽວ
ສາມັກຄີສືບສ້າງ ເມືອງບ້ານດັ່ງທ່ານຫວັງ ນັ້ນແລ້ວ!




# ວິທີເຮັດວຽກ

ພາກທີ 3
ພະຍາດເປັນແຕ່ປາກ

ຕໍ່ຈາກສະບັບກ່ອນ...

ຄົນຜູ້ເຮັດວຽກໂຄສະນານັ້ນ ຍາມໃດກໍຕ້ອງຖາມຕົນເອງຢູ່ສະເໝີວ່າ: ແມ່ນຂຽນໃຫ້ໃຜເບິ່ງ? ແມ່ນເວົ້າໃຫ້ໃຜຟັງ? ຖ້າບໍ່ຄິດແນວນັ້ນ ກໍແມ່ນເປັນຄືວ່າ ມີແນວຄິດບໍ່ຢາກໃຫ້ຜູ້ອື່ນເບິ່ງສິ່ງທີ່ຕົນເຮັດ ແລະ ບໍ່ຢາກໃຫ້ຜູ້ອື່ນຟັງສິ່ງທີ່ຕົນເວົ້າເທົ່ານັ້ນແລ້ວ ມີຫຼາຍຄົນຄິດວ່າ ສິ່ງທີ່ໂຕຂຽນ ແລະ ສິ່ງທີ່ໂຕເວົ້ານັ້ນ ຜູ້ອື່ນກໍຄົງເຂົ້າໃຈຄືກັນໝົດ. ແຕ່ວ່າຕາມຄວາມຈິງມັນຜິດບໍ່ເປັນແນວນັ້ນ ໂຕໃຊ້ແຕ່ຄວາມປາລີ, ໃຊ້ແຕ່ຄວາມສູງໆ ຂຽນຕາມວິທີຝຣັ່ງ, ປະໂຫຍກໃດກໍຍືດຍາວ ດັ່ງນັ້ນ, ຈະໄປໃຫ້ປະຊາຊົນເຂົ້າໃຈແນວໃດໄດ້ ເມື່ອເຂົາບໍ່ເຂົ້າໃຈກໍຊ້ຳພັດກັບໄປດູຖູກເຂົາ ແລ້ວເວົ້າວ່າເປັນຄື: "ສີຊໍໃຫ້ຄວາຍຟັງ"ໃນເລື່ອງນີ້ ຈະໄປຕິຜູ້ຟັງວ່າບໍ່ເຂົ້າໃຈນັ້ນແມ່ນບໍ່ຖືກ ມັນຕ້ອງເອີ້ນຜູ້ໂຄສະນາທີ່ຂຽນ ແລະ ເວົ້າບໍ່ໃຫ້ຜູ້ອື່ນເຂົ້າໃຈນັ້ນແຫຼະເປັນ "ຄວາຍ" ຈຶ່ງຈະຖືກ ຖ້າຢາກເປັນເພື່ອນກັນກໍຕ້ອງເຂົ້າໃຈກັນ, ຖ້າບໍ່ເຂົ້າໃຈກັນ ກໍບໍ່ເປັນເພື່ອນກັນໄດ້ ຄົນຜູ້ໂຄສະນາມາບໍ່ກວດກາ, ບໍ່ຈຳແນກ, ບໍ່ຄົ້ນຄວ້າ, ບໍ່ຮູ້ຈັກ ແລະ ບໍ່ເຂົ້າໃຈປະຊາຊົນ, ຄິດອອກອັນໃດຂຽນອັນນັ້ນ ເຮັດວຽກບໍ່ຫ່ອນໄດ້ຜົນ, ມີແຕ່ຈະຕ້ອງປະລາໄຊທໍ່ນັ້ນແລ້ວ.

ຄ) ເວົ້າແບບແຫ້ງແລ້ງຈົນປັນຍາ:

ເວົ້າໄປເວົ້າມາຫຼາຍເທື່ອແຕ່ແນວເກົ່າ, ເວົ້າແຕ່ສິ່ງຕົນຮຽນໄດ້ກັບປາກ, ບາງທີຄວາມເວົ້າທີ່ຈື່ໄດ້ນັ້ນ ເອົາມາເວົ້າບໍ່ຖືກຊ້ຳ ເວົ້າແນວນັ້ນບໍ່ມີຜູ້ໃດຢາກຟັງ, ເຮັດໃຫ້ປະຊາຊົນເບີດໜ່າຍ, ນັ່ງຟັງກໍເຫງົານອນ ຖ້າພວກເຮົາ ບໍ່ຢາກໂຄສະນານຳປະຊາຊົນ ກໍຕ້ອງຮຽນວິທີເວົ້າຂອງປະຊາຊົນ ຈຶ່ງຈະເວົ້າເຂົ້າຫູຂອງປະຊາຊົນ. ສຸພາສິດເວົ້າໄດ້ວ່າ: "ຮຽນກິນ, ຮຽນເວົ້າ, ຮຽນມັດເຂົ້າໄຂທໍ່ຄວາມກິນ" ຄວາມເວົ້ານີ້ແມ່ນຖືກ ເພາະວ່າ ເວົ້າກໍຕ້ອງຮຽນ ແລະ ຕ້ອງອົດທົນຮຽນ ຈຶ່ງຈະເວົ້າໄດ້, ວິທີເວົ້າຂອງປະຊາຊົນນັ້ນ ແມ່ນຄົບຖ້ວນພຽງພໍທີ່ສຸດມ່ວນຊື່ນທີ່ສຸດ ຖືກກັບຄວາມຈິງທີ່ສຸດ ແລ້ວຊ້ຳງ່າຍດາຍທີ່ສຸດ. ພະນັກງານພວກເຮົາໄປໂຄສະນາ ຍັງບໍ່ທັນໄດ້ຮຽນວິທີປາກເວົ້າແນວນັ້ນເທື່ອ, ເພາະສະນັ້ນ ເວລາຂຽນ ແລະ ເວລາເວົ້າ ຈຶ່ງເປັນການແຫ້ງແລ້ງ, ແຂງກະດ້າງ, ບໍ່ມ່ວນຊື່ນ, ບໍ່ຖືກກັບສະພາບຕົວຈິງ,ຄວາມເວົ້າຂອງພວກເຮົາ ຍັງບໍ່ພຽງພໍ

ຈຶ່ງຈຳເປັນຕ້ອງຢືມເອົາຄວາມຕ່າງປະເທດມາເວົ້າ ເຊັ່ນ: ຄວາມໄທ, ຄວາມປາລີ ຫຼື ຄວາມຝຣັ່ງ, ແຕ່ວ່າຄວາມຢືມນັ້ນ ກໍຕ້ອງໃຫ້ມີຂອບເຂດ. ຄວາມໃດພາສາລາວເຮົາມີ ກໍຕ້ອງໃຊ້ພາສາລາວເຮົາ, ຄວາມໃດບໍ່ມີແທ້ ຈຶ່ງຢືມເອົາພາສາອື່ນມາໃຊ້.

ອ່ານຕໍ່ສະບັບໜ້າ...




# ທຸກ

# ດົ້ນກົບເມກ

ຄວາມທຸກຂອງຄົນເຮົາມາຄູ່ກັນກັບຕອນເຮົາເກີດມາ ດັ່ງນັ້ນ, ບາງຄົນກ່ອນຈະເວົ້າວ່າ ບໍ່ຢາກທຸກ ກໍຄືບໍ່ຕ້ອງເກີດ ເພາະທຸກຄົນເກີດມາແລ້ວຍ່ອມມີທຸກເປັນຂອງຕາມມາ ເຊິ່ງບໍ່ຕ່າງກັບຄວາມສຸກທີ່ຄູ່ກັບຄວາມທຸກ ກາງຄືນຄູ່ກັບກາງເວັນ, ຄົນໃດມີລາບຍົດສັນລະເສີນ ກໍມີມື້ເສື່ອມເຊັ່ນກັນ ແຕ່ປະເດັນສຳຄັນຢູ່ບ່ອນວ່າ ເມື່ອເກີດມາແລ້ວ ເຮົາຈະເຮັດແນວໃດໃຫ້ມີຄວາມທຸກໜ້ອຍ ແລະ ຄວາມສຸກຫຼາຍກວ່າຄວາມທຸກ ຍ່ອມຂຶ້ນຢູ່ກັບສະຕິປັນຍາຂອງແຕ່ລະຄົນ.

ພຸດທະສາສະໜາສອນວ່າ: ຄົນຈະພົ້ນຈາກຄວາມທຸກຍາກຈົນໄດ້ ຍ້ອນຂະຫຍັນໝັ່ນພຽນປະກອບອາຊີບສຸດຈະລິດ ການຮູ້ຈັກສະແຫວງຫາຊັບ ແລະ ໃຊ້ຈ່າຍຊັບໃຫ້ເປັນ ຄືຫຼັກການເບື້ອງຕົ້ນທີ່ສຳຄັນໃນການກຳຈັດຄວາມທຸກຈົນ.

ຄວາມທຸກຂອງຄົນ ມີທັງທຸກກາຍ ແລະ ທຸກໃຈ ຍົກຕົວຢ່າງ: ບາງຄອບຄົວທຸກຈົນຂາດເຂີນຊັບໃຊ້ຈ່າຍ ຫາມາໄດ້ ກະບໍ່ພຽງພໍໃຊ້ຈ່າຍ ເພາະລາຍໄດ້ໜ້ອຍ; ບາງຄອບຄົວຫາໄດ້ຫຼາຍກໍຍັງມີທຸກ; ຜູ້ຫາໄດ້ຊັບຫລາຍແຕ່ທຸກໃຈກໍມີ ເພາະຄອບຄົວແຕກແຍກ ສະມາຊິກໃນຄອບຄົວບໍ່ພ້ອມພຽງສາມັກຄີກັນ; ບາງຄອບຄົວປານແກ່ໄມ້ທາງປາຍ ຜົວໄປທາງໜຶ່ງ ເມຍໄປອີກທາງໜຶ່ງ.

ຜູ້ຂຽນຈຶ່ງຂໍຍົກເອົາເຫດຜົນວິທີການແກ້ທຸກທີ່ພຸດທະສາສະໜາສອນໄວ້ ພໍເປັນແນວທາງໃຫ້ຜູ້ອ່ານໄດ້ນຳໄປຄິດພິຈາລະນາເປັນບົດຮຽນຊີວິດຕົວຈິງຄື ພະພຸດທະເຈົ້າສອນວ່າ: ຊັບສິນສົມບັດ ຍ່ອມເກີດແກ່ຜູ້ຂະຫຍັນ, ຄົນຈະພົ້ນທຸກໄດ້ ເພາະຄວາມພຽນ ຖ້າວ່າຄົນຂີ້ຄ້ານ ຍ່ອມເປັນການຍາກທີ່ຈະຫາຊັບໄດ້ ດັ່ງນັ້ນ, ຫຼັກທຳມະພົ້ນທຸກຈຶ່ງປະກອບດ້ວຍ 4 ຂໍ້ຄື: (1) ໃຫ້ໝັ່ນສະແຫວງຫາຊັບສົມບັດ; (2) ໃຫ້ຮູ້ຈັກເກັບຮັກສາ ແລະ ໃຊ້ຈ່າຍໃຫ້ເປັນໃນຊັບທີ່ຫາມາໄດ້; (3) ໃຫ້ຮູ້ຈັກຄົບກັບມິດໝູ່ເພື່ອນທີ່ດີ ແນະນຳປະໂຫຍດ, ບໍ່ນຳພາໄປທາງອະບາຍຍະມຸກເສື່ອມເສຍ; (4) ໃຫ້ຮູ້ຈັກການດຳເນີນຊີວິດສະເໝີຕົ້ນສະເໝີປາຍ ຄືບໍ່ໃຊ້ຈ່າຍຟຸມເຟືອຍ, ຮູ້ຈັກປະຢັດອົດອອມ.

ຫຼັກທຳມະທີ່ສອນໄວ້ຂ້າງເທິງນັ້ນ ເປັນຫຼັກການດຳເນີນຊີວິດທີ່ພະພຸດທະເຈົ້າສອນມາໄດ້ສອງພັນກວ່າປີແລ້ວ ຜູ້ຂຽນເຫັນວ່າມັນຍັງນຳມາໃຊ້ໄດ້ ບໍ່ເຄີຍຫຼ້າຫຼັງ!

# ກຳລັງປ້ອງກັນຄວາມສະຫງົບ

# ໂດຍ: ຜູ້ອື່ນ

ກຳລັງປ້ອງກັນຄວາມສະຫງົບ (ປກສ) ແມ່ນກຳລັງປະກອບອາວຸດຂອງພັກ ໂດຍແມ່ນພັກປະຊາຊົນ ປະຕິວັດລາວ ເປັນຜູ້ສ້າງຕັ້ງ, ນຳພາເດັດຂາດໂດຍກົງ ແລະ ຮອບດ້ານ; ເປັນກຳລັງທີ່ມາຈາກປະຊາຊົນ ໂດຍປະຊາຊົນ ແລະ ເພື່ອປະຊາຊົນ ຍາມໃດກໍຮັບໃຊ້ປະຊາຊົນຢ່າງບໍ່ມີຂອບເຂດ ແລະ ເງື່ອນໄຂ ທັງເປັນກຳລັງປະກອບອາວຸດ ທີ່ມີລະບຽບວິໄນເຂັ້ມງວດ, ເວລາໃດ ແລະ ໃນສະຖານະການໃດກໍເດັດດ່ຽວ ເດັດຂາດຕໍ່ສັດຕູ ເຊິ່ງປະກອບມີກຳລັງປ້ອງກັນຄວາມສະຫງົບອາຊີບ ແລະ ເຄິ່ງອາຊີບ.

ກຳລັງປ້ອງກັນຄວາມສະຫງົບອາຊີບ ແມ່ນກຳລັງທີ່ມີຫຼາຍເຫຼົ່າວິຊາສະເພາະໄດ້ຮັບການບຳລຸງສ້າງວິຊາສະເພາະຢ່າງເປັນລະບົບ ສັງກັດຢູ່ໃນກົງຈັກການຈັດຕັ້ງຂອງກຳລັງປ້ອງກັນຄວາມສະຫງົບ ປະກອບດ້ວຍນາຍ ແລະ ພົນຕຳຫຼວດ ໄດ້ຮັບການປະກອບອາວຸດ, ເຕັກນິກວິຊາສະເພາະຢ່າງຄົບຖ້ວນ ທັງມີພາລະບົດບາດປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນ, ຄວາມສະຫງົບທາງດ້ານການເມືອງ, ເສດຖະກິດ ແລະ ສັງຄົມ, ປົກປ້ອງຜົນປະໂຫຍດຂອງລັດ ລວມໝູ່, ປົກປ້ອງສິດແລະຜົນປະໂຫຍດຂອງປະຊາຊົນ.

ກຳລັງປ້ອງກັນຄວາມສະຫງົບເຄິ່ງອາຊີບ ແມ່ນກຳລັງປ້ອງກັນຄວາມສະຫງົບບ້ານ, ກຳລັງປ້ອງກັນພາຍໃນ, ກຳລັງປ້ອງກັນຕົວ ແລະ ກຳລັງຮັກສາຄວາມປອດໄພ ທີ່ເຮັດວຽກງານປ້ອງກັນຄວາມສະຫງົບຢູ່ຮາກຖານບ້ານ, ສຳນັກງານ, ອົງການ, ຫົວໜ່ວຍທຸລະກິດຕ່າງໆ ທີ່ບໍ່ໄດ້ຮັບການປະດັບຊັ້ນຄືກັນກັບກຳລັງອາຊີບ.

ໃນໄລຍະປີ 1986 ເປັນຕົ້ນມາ ໂດຍສະເພາະແມ່ນກອງ ປະຊຸມໃຫຍ່ ຄັ້ງທີ IV ຂອງພັກໄດ້ວາງທິດທາງໜ້າທີ່ “ປັບປຸງວຽກງານປ້ອງກັນຊາດປ້ອງກັນຄວາມສະຫງົບຮອບດ້ານຢູ່ພື້ນຖານ; ຈັດຕັ້ງແນວຮົບປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢູ່ທ້ອງຖິ່ນຢ່າງແໜ້ນໜາ; ຕັ້ງໜ້າປັບປຸງ, ຍົກສູງຄຸນນະພາບຂອງບັນດາກຳລັງທະຫານ ແລະ ກຳລັງປ້ອງກັນຄວາມສະຫງົບປະຊາຊົນ ສົມທົບແໜ້ນລະຫວ່າງວຽກງານເສດຖະກິດກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເດັດດ່ຽວທັບມ້າງທຸກການເຄື່ອນໄຫວມ້າງເພທຳລາຍຂອງສັດຕູ ແລະ ປົກປັກຮັກສາປະເທດຊາດ ໄວ້ໃຫ້ໝັ້ນຄົງ”.

ປະທານ ໄກສອນ ພົມວິຫານ ໄດ້ໂອ້ລົມ ແລະ ເນັ້ນໜັກ ໃຫ້ກຳລັງປ້ອງກັນຄວາມສະຫງົບ ປະຕິບັດ 3 ໜ້າທີ່ຄື: ຕຳຫຼວດ ຕ້ອງຮູ້ເຮັດວຽກງານກໍ່ສ້າງຮາກຖານການເມືອງແລະພັດທະນາຊົນນະບົດ; ຕ້ອງຮູ້ເຮັດວຽກສືບຂ່າວກຳສະພາບ ແລະ ຕຳຫຼວດຕ້ອງຮູ້ກົດໝາຍພາຍໃນ ແລະ ຕ່າງປະເທດ; ໂດຍປະຕິບັດຕາມມະຕິ IV ຂອງພັກ ແລະ ທິດຊີ້ນຳຂອງປະທານ ໄກສອນ ພົມວິຫານ ກຳລັງປ້ອງກັນຄວາມສະຫງົບໄດ້ສົມທົບກັບກອງທັບປະຊາຊົນລາວ ຕີເອົາຊະນະການບຸກຢຶດຂອງພວກປະຕິການ, ທັບມ້າງກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ, ສະກັດກັ້ນ ແລະ ແກ້ໄຂ ປາກົດການຫຍໍ້ທໍ້ຂອງສັງຄົມ ອັນພົ້ນເດັ່ນແມ່ນການແກ້ໄຂແນວຄິດລະແວງສົງໄສ ແລະ ທັດສະນະຜິດເຂວກ່ຽວກັບສັງຄົມນິຍົມ, ແນວຄິດຫຼາຍພັກຫຼາຍເຄົ້າ, ປະຊາທິປະໄຕເສລີ ແລະ ອື່ນໆ.

ກຳລັງປ້ອງກັນຄວາມສະຫງົບ ໄດ້ສືບຕໍ່ຫັນເອົາກຳລັງລົງກໍ່ສ້າງຮາກຖານການເມືອງຕິດພັນກັບການພັດທະນາຊົນນະບົດຮອບດ້ານ, ປັບປຸງກໍ່ສ້າງກຳລັງ ແລະ ວຽກງານປ້ອງກັນຊາດ- ປ້ອງກັນຄວາມສະຫງົບຢູ່ຮາກຖານ ໃຫ້ເຂັ້ມແຂງຕາມ 4 ເນື້ອໃນ 4 ຄາດໝາຍ, ເຮັດໃຫ້ສະພາບການທົ່ວປະເທດມີຄວາມສະຫງົບ ອັນພົ້ນເດັ່ນແມ່ນການປ້ອງກັນອົງການນຳຂອງພັກ-ລັດ, ປ້ອງກັນກອງປະຊຸມລະດັບຊາດ ແລະ ກອງປະຊຸມລະດັບສາກົນຕ່າງໆມີຄວາມສະຫງົບປອດໄພ 100%; ເປັນເຈົ້າການປົກປ້ອງເຂດນ້ຳແດນດິນ, ແກ້ໄຂບັນຫາປາກົດການຫຍໍ້ທໍ້ຕ່າງໆໄດ້ຢ່າງທັນການ.

ເວົ້າລວມແລ້ວ, ກຳລັງປ້ອງກັນຄວາມສະຫງົບ ພ້ອມກັບກອງທັບປະຊາຊົນລາວ ສາມາດປົກປັກຮັກສາ ປະເທດຊາດ ແລະ ດິນແດນລາວໄວ້ຢ່າງໝັ້ນຄົງ, ບໍ່ມີເຫດການບໍ່ດີທາງການເມືອງເກີດຂຶ້ນຮ້າຍແຮງ; ສາມາດປ້ອງກັນ ຜູ້ນຳພັກລັດ, ສຳນັກງານ- ອົງການ, ກອງປະຊຸມໃຫຍ່, ງານ-ບຸນສຳຄັນລະດັບຊາດ ແລະ ລະດັບສາກົນ, ປ້ອງກັນແຂກຕ່າງປະເທດໃຫ້ມີຄວາມປອດໄພ 100%; ກຳລັງປ້ອງກັນຄວາມສະຫງົບໄດ້ຮັບການປັບປຸງ ແລະ ກໍ່ສ້າງໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວ ທັງທາງດ້ານຈຳນວນ ແລະ ຄຸນນະພາບ; ໄດ້ກາຍເປັນກຳລັງຕົ້ນຕໍທີ່ເຮັດໜ້າທີ່ກໍ່ສ້າງຮາກຖານການເມືອງ; ປະຕິບັດແນວທາງການຕ່າງປະເທດຂອງພັກໄດ້ເປັນຢ່າງດີ.

ດ້ວຍຜົນງານ ແລະ ຄຸນງາມຄວາມດີຕ່າງໆຜ່ານມານັ້ນ ພັກ-ລັດຖະບານ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ຍ້ອງຍໍ ສັນລະເສີນກຳລັງປ້ອງກັນຄວາມສະຫງົບວ່າ: “ເປັນກຳລັງປະກອບອາວຸດອັນແຫຼມຄົມ, ຈົງຮັກພັກດີຕໍ່ພັກ, ຕໍ່ປະຊາຊົນລາວບັນດາເຜົ່າ” ສົມແລ້ວທີ່ເປັນກຳລັງປະກອບອາວຸດວິລະຊົນຂອງຊາດລາວວິລະຊົນ.



# ຂຽນຄຳລາວໃຫ້ຖືກ

# ຄູແສງ

| ຄຳຖືກ | ຄຳຜິດ |
|---|---|
| ຍົກຍ້າຍ | ໂຍກຍ້າຍ |
| ໂຍກເຍກ | ຍົກເຍກ |
| ຍາດແຍ່ງ | ຍາດແຍ້ງ |
| ຂັດແຍ້ງ | ຂັດແຍ່ງ |
| ຢອກໄຍ | ຍອກໄຍ |
| ຍັກຍອກ | ຢັກຢອກ |
| ປະຢັດ | ປະຫຍັດ |
| ມັດທະຍັດ | ມັດທະຢັດ |

# ວາລະສານ




**ວາລະສານ:** ແມ່ນໜັງສືພິມ ທີ່ພິມອອກມາເປັນຄັ້ງຄາວ. ຈະເປັນລາຍອາທິດ. ລາຍປັກ (ລາຍ ຢຸ ວັນ) ລາຍເດືອນ ເຊັ່ນ: ວາລະສານຕ່າງໆຄືວາລະສານທ່ອງທ່ຽວ. ກ່ຽວກັບວັນນະຄະດີ. ວາລະສານວັດທະນະທຳ. ວາລະສານການພິມ ແລະ ອື່ນໆ.

ໜຶ່ງທີ່ຄວນຮູ້ໃນຄຳວ່າ ວາລະສານນັ້ນ ເຮົາຄວນຈະຮູ້ສັບພາສາ ໃນຄຳວ່າ “ວາລະ” ເສຍກ່ອນ ເພາະວາລະສານ ເປັນພາສາບາລີ. ພາສາຂອງຄົນອິນເດຍບູຮານ...

(ວາລະ ແປວ່າ ຄັ້ງ. ຄາວ. ໄລຍະ. ມື້ໜຶ່ງ) ເມື່ອເອົາວາລະ ໄປບອກໃສ່ຄຳວ່າ “ສານ” ມັນຈຶ່ງອອກມາເປັນວາລະສານ ທີ່ໝາຍເຖິງ ບໍ່ໄດ້ພິມເປັນລາຍວັນ. ແຕ່ພິມເປັນລາຍຕ່າງໆ ດັ່ງທີ່ກ່າວມາຂ້າງເທິງນັ້ນ ໃນຄຳວ່າ “ສານ” ກໍແມ່ນການສື່ສານ. ແມ່ນການສື່ສານ ຫຼື ສານຕໍ່ ໃຫ້ຜູ້ອ່ານໄດ້ອ່ານນັ້ນເອງ.



## ສຸຂະພາບທາຍໂຣດ

# ວິຕາມິນທີ່ຈຳເປັນສຳລັບແຕ່ລະຊ່ວງອາຍຸ

**ແປ ແລະ ຮຽບຮຽງໂດຍ: ສາວແອ່ນ**




ເນື່ອງຈາກແຕ່ລະຄົນມີຄວາມຕ້ອງການສານອາຫານທີ່ແຕກຕ່າງກັນ ຮ່າງກາຍມີສະພາບຂາດວິຕາມິນ ຫຼື ບາງແຮ່ທາດທີ່ສຳຄັນໄປໂດຍບໍ່ຮູ້ຕົວ (Hidden Hunger) ອາດຈະເປັນຍ້ອນວິຖີຊີວິດທີ່ເລັ່ງດ່ວນ, ການກິນອາຫານທີ່ບໍ່ຫຼາກຫຼາຍ ຮ່າງກາຍຈຶ່ງໄດ້ຮັບສານອາຫານທີ່ບໍ່ພຽງພໍ ເຮັດໃຫ້ພົບກັບບັນຫາການຂາດສານອາຫານ; ການກິນອາຫານເສີມ ຈຶ່ງກາຍເປັນທີ່ນິຍົມຫຼາຍຂຶ້ນໃນປັດຈຸບັນ ແຕ່ພວກເຮົາຮູ້ໄດ້ແນວໃດວ່າອາຫານເສີມທີ່ກິນນັ້ນ ເໝາະກັບພວກເຮົາແລ້ວຫຼືບໍ່? ເພາະແຕ່ລະຄົນມີຄວາມຕ້ອງການດ້ານໂພຊະນາການທີ່ແຕກຕ່າງກັນ ຈະບໍ່ດີກວ່າບໍ ຖ້າຮູ້ວ່າຮ່າງກາຍຂາດວິຕາມິນ ຫຼື ແຮ່ທາດຊະນິດໃດ? ເພື່ອຫຼຸດຜ່ອນອັນຕະລາຍຈາກການໄດ້ຮັບເກີນຂະໜາດ ຫຼື ບໍ່ເໝາະສົມ; ໃນຄໍລຳສຸຂະພາບທາຍໂລຄາສະບັບນີ້ ເຮົາມີການກິນວິຕາມິນທີ່ຈຳເປັນສຳລັບແຕ່ລະກຸ່ມອາຍຸມານຳສະເໜີໃຫ້ແກ່ບັນທ່ານໄດ້ຮັບຮູ້ນຳກັນ

- ອາຍຸຕ່ຳກວ່າ 20 ປີ ເປັນໄລຍະທີ່ຮ່າງກາຍຈະເລີນເຕີບໂຕ ດັ່ງນັ້ນ, ຈຶ່ງຕ້ອງການສານອາຫານທີ່ຊ່ວຍໃນການເສີມສ້າງ ເຊັ່ນ: ແຄວຊຽມ ເພື່ອຊ່ວຍເສີມສ້າງມວນກະດູກ, ທາດເຫຼັກ ຊ່ວຍສ້າງເມັດເລືອດແດງປ້ອງກັນພະຍາດເລືອດຈາງ, ໂອເມກ້າ 3 (Omega-3) ຊ່ວຍເສີມສ້າງສະມາທິ ແລະ ຄວາມຈື່ຈຳ.

- ອາຍຸລະຫວ່າງ 20-40 ປີ ຫຼື ໄລຍະເຮັດວຽກ ເປັນໄລຍະທີ່ຈະມີຄວາມເມື່ອຍຈາກການເຮັດວຽກ ຄວນກິນວິຕາມິນທີ່ຊ່ວຍເພີ່ມພະລັງງານ, ບຳລຸງລະບົບປະສາດ, ເສີມສ້າງລະບົບພູມຕ້ານທານ ເຊັ່ນ: ວິຕາມິນບີລວມ, ວິຕາມິນຊີ, ໂຄເອັນຄິວເທັນ (coenzyme Q10).

- ອາຍຸ 40 ປີຂຶ້ນໄປ ເປັນໄລຍະທີ່ການເຮັດວຽກຂອງຮ່າງກາຍເລີ່ມຫຼຸດລົງ ຫຼື ເສື່ອມລົງ ກະດູກເລີ່ມບາງລົງ ຜິວໜັງເລີ່ມຫ່ຽວແຫ້ງ ການເຮັດວຽກຂອງອະໄວຍະວະຕ່າງໆເລີ່ມບໍ່ດີຄືເກົ່າ ຈຶ່ງຕ້ອງການສານອາຫານເພີ່ມຂຶ້ນ ເຊັ່ນ: ວິຕາມິນບີລວມ, ວິຕາມິນຊີ, ວິຕາມິນດີ, ທາດແຄວຊຽມ, ໂຄເອັນຄິວເທັນ (coenzyme Q10).

www.sanook.com



## ອາດ ກະວີລາວ

# ມອບແດ່ວັນທີ 5 ເມສາ

**# ໂດຍ: ກົງໃຈ ແສງອຳພັນ**

**ເນື່ອງໃນໂອກາດ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ 62 ປີ (5/4/1961-5/4/2023)**

❈ 5 ເມສາແມ່ນມື້
ປກສ ເປັນນາມ
62 ປີວຽນມາເຂົ້າ
1961 ແມ່ນມື້

ກຳເນີດກອງກຳລັງ
ແກ່ນແຂງຄົມກ້າ
ປະຊາລາວຈຳຈື່
ກຳລັງກ້ອນກໍ່ມາ

❈ ເປັນກຳລັງແກ່ນກ້າ
ເບິ່ງແຍງຄວາມປອດໄພ
ຕັ້ງແຕ່ເໜືອເຖິງໃຕ້
ປ້ອງກັນຄວາມສະຫງົບເຂດບ້ານ

ປະຊາເພິ່ງອາໄສ
ໄພ່ປະຊາຊາວເຊື້ອ
ພູມໃຈເມື່ອມີທ່ານ
ລາວພົ້ນຜ່ານໄພ

❈ ນັບແຕ່ເດີນຍ່າງຍ້າຍ
ທ່ານເປັນຄົນດູແລ
ຄອຍເຕືອນໄພລະວັງເຝົ້າ
ເປັນກຳລັງເພິ່ງໃຫ້

ຂັບເຄື່ອນຕາມຖະໜົນ
ເບິ່ງແຍງທຸກຝີກ້າວ
ຍາມເຮົານອນນັ່ງ
ປະຊາໄດ້ອຸ່ນຄິງ

❈ ສົມວ່າເປັນຜູ່ກ້າ
ຍອມທຸກທົນສະຫຼະສຸກ
ຂານອາສາສະຫຼະເນື້ອ
ຂໍວິ່ງວອນເທບໄທ້

ຄົນຂອງພັກປະຊາຊົນ
ສ່ວນຕົວເພື່ອເມືອງບ້ານ
ເພື່ອປະຊາບໍ່ຢ້ານຢ່ອນ
ບັນດານໃຫ້ສິ່ງພອນ

❈ ການງານສຸຂະພາບພ້ອມ
ຕຳຫຼວດລາວໝົດທຸກຄົນ
ເງິນຄຳມາໂຮມລົ້ນ
ມີແຕ່ສຸກລາບລົ້ນ

ຈະເລີນເດັ່ນຍືນຍາວ
ຈົ່ງເຂັ້ມແຂງແຮງກ້າ
ໄພຢ່າພານມານຢ່າແວ່
ຈະເລີນເລື້ອຍຕະຫຼອດໄປ ທ່ານເອີຍ!



## ຜັກຫວານ ລະບາຍ

*(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)*

**# ສາວຈົ້ມ**

✳ 1 ເມສາຊ່າກ້ອງ ປະທັວດກ່າວຈົດຈ່າ **ທ່ານ ກິບົມ ພົບເສນາ** ຖືກຄາດຕະກຳ ຄົບຂອບ 60 ປີ ໄດ້ ທ່ານສິ້ນລົມຫາຍໃຈລົງຍ້ອນ **ເງື້ອມມືໂຈນບຸ້ນຊາດ** ພວກປະຕິການ **ຂວາຈັດດຽງຈັບລອບຂ້າ** ສາກົນຮູ້ກ່າວຂານ ພວກມັນຈອບຊື້ຈ້າງ ວາງທ່ອນເງິນໂດລາ ທ່ານບໍ່ຍອມສັດຊາ ຈຶ່ງຖືກຄາດຕະກຳທຳຮຸນ ເຮັດໃຫ້ປວງປະຊາເຊື້ອ ສູນເສຍຄົນຂອງຊາດ ບຸດຕາທັງບຸດຕີພໍ່ພ້ອມ ກາຍເປັນລູກກຳພ້າ ຍ້ອນອຳຄວາມຊົ່ວຊ້າ ຂອງພວກໂຈນປ່ອງບ້າ ທຳລາຍຂ້າຢ່າງເລືອດເຢັນ **ໝ່າຍເດ!**

(ທ່ານ ກິບົມ ພົບເສນາ ຖືກຄາດຕະກຳ 1/4/1963)

✳ **ຊົມ**ເຊີຍ ວັນສ້າງຕັ້ງກຳລັງປ້ອງກັນຄວາມສະຫງົບ ຄົບຮອບ **62 ປີ (5/4/1961-5/4/2023)** ຂໍໃຫ້ສົມມາດແມ້ງ ພະໄນມຸ່ງໝາຍຫວັງ **ທຸກທ່ານເປີ!** ຂໍໃຫ້ມີຄວາມສຸກຕຳຫຼວດລາວຄົບກ້າ ໜ້າທີ່ການງານກ້າກວ ດາວປະດັບເຕັມເຕັມບ່າ ກຽດຍົດສູງສຽດຟ້າ ຈະເລີນໜ້າຢ່າຖອຍ ໃຫ້ໄດ້ເປັນນາຍຮ້ອຍ ນາຍພັນຊົ້ນເລື່ອນ ເຄື່ອນຊີ້ນ ເປັນນາຍພົນກຽດກ້ອງ ປະຊາຍ້ອງຊື່ນຊົມ **ທ່ານເອີຍ!**

## ຊອບຍິ້ມ

*# ແອ່ນຕຸ້ງ*

**ເລື່ອງ: ນັກໂທດ**

ມື້ໜຶ່ງນັກໂທດສອງຄົນລົມກັນ ນັກໂທດ 1 ຈົ່ມເສຍໃຈ

**ນັກໂທດ 1:** ຄັນກູຟັງຄວາມແມ່ກູກະຄືຊິບໍ່ໄດ້ມານອນໃນຄຸກແບບ ນີ້ດອກ.

**ນັກໂທດ 2:** ແມ່ມຶງເພີ່ນເອົ້າຫຍັງ?

**ນັກໂທດ 1:** ກູຊິໄປຮູ້ຫວາ ກະຍັງວ່າກູບໍ່ໄດ້ຟັງ

**ນັກໂທດ 2:** ???



## ຄະຕິເຕືອນໃຈ

*# ດອກສະຍອມ*

ໃຈບໍ່ໃສຕໍ່ແກ້ວ
ແຍງເງົາກໍ່ບໍ່ສ່ອງ
ໃຈບໍ່ໃສຕໍ່ຄ້ອງ
ຕີໄດ້ກະບໍ່ດັງ




# ກິລາ – ກີລາ

"ລຸງຄຳ! ຫວ່າງນີ້ ເຫັນຫຼາຍຄົນຫຼາຍບ່ອນພາກັນຖຽງເລື່ອງ 'ກິລາ' ແລະ 'ກີລາ' ວ່າຈະສະກົດເປັນສຽງສັ້ນ ຫຼືສຽງຍາວໃນພະຍາງທຳອິດຈຶ່ງຖືກ? ແຕ່ຕາມທີ່ຫຼານໄດ້ຮຽນມາ ແລະເຫັນເພິ່ນສະກົດສ່ວນຫຼາຍກໍແມ່ນ 'ກິລາ' ຫັ້ນແລ້ວ! ບໍ່ເຊື່ອກະເບິ່ງໜ້າປົກປຶ້ມແບບຮຽນທຸກໆຫົວແມ້ ລ້ວນແຕ່ສະກົດເປັນ 'ກະຊວງສຶກສາທິການ ແລະ ກິລາ'."

"ແມ່ນຄວາມຫຼານຫັ້ນລະ! ແຕ່ຢູ່ໃນວັດຈະນານຸກົມພາສາລາວຈຳນວນໜຶ່ງພັດສະກົດເປັນ 'ກີລາ'... ກີ ສຽງຍາວໄດ໋, ຫຼານ!"

"ເປັນຫຍັງເປັນແນວນັ້ນນໍ, ລຸງ?"

"ມາໆ, ລຸງຊິອະທິບາຍສູ່ຟັງເລື່ອງ 'ກິລາ' ກັບ 'ກີລາ' ນີ້ ມັນມີຄວາມເປັນມາຄືແນວນີ້:

ຄຳທີ່ມີຄວາມໝາຍວ່າ "ການຫຼິ້ນເພື່ອອອກກຳລັງກາຍຫຼືຄວາມມ່ວນຊື່ນ" ຢູ່ໃນວັດຈະນານຸກົມ 6 ສະບັບ ຄື (1) ວັດຈະນານຸກົມລາວ ສະບັບມະຫາສີລາ ວີຣະວົງ ປີ 1960, (2) Dictionnaire Lao-Francais Tome 1 ປີ 1970, (3) ວັດຈະນານຸກົມລາວ-ລັດເຊຍ, (4) ວັດຈະນານຸກົມພາສາລາວ ສະບັບ ດຣ. ທອງຄຳ ອ່ອນມະນີສອນ ປີ 1992, (5) ວັດຈະນານຸກົມລາວ-ຫວຽດ ປີ 1995, ແລະ (6) ວັດຈະນານຸກົມພາສາລາວ ສະບັບສະຖາບັນວິທະຍາສາດສັງຄົມແຫ່ງຊາດ ປີ 2012 ໄດ້ສະກົດເປັນ 'ກີລາ', ສາເຫດທີ່ພາໃຫ້ສະກົດເປັນ 'ກີລາ' ແມ່ນຍ້ອນວ່າຄຳດັ່ງກ່າວມາຈາກເຄົ້າປາລີ ທີ່ອອກສຽງວ່າ 'ກີລາ' ຖອດສຽງມາຈາກ kīḷā (f.) ເຊິ່ງແປເປັນພາສາອັງກິດກໍແມ່ນ playing; sport. ຄຽງຄູ່ກັບການສະກົດຄຳເປັນ 'ກີລາ' ໃນວັດຈະນານຸກົມ 6 ເຫຼັ້ມດັ່ງກ່າວ, ເມື່ອໄປສຳຫຼວດເບິ່ງການໃຊ້ຢ່າງເປັນທາງການ ທັງປຶ້ມແບບຮຽນ, ເອກະສານຕ່າງໆ ແລະໃນວັດຈະນານຸກົມອີກຈຳນວນໜຶ່ງ ຊ້ຳພັດສະກົດເປັນ 'ກິລາ'.

ການສະກົດຄຳນີ້ເປັນ "ກິລາ" ແມ່ນປາກົດມີມາແຕ່ຊຸມປີ 60 ໂດຍປາກົດຢູ່ໃນປຶ້ມຕ່າງໆ ດັ່ງນີ້:

- ແບບສອນອ່ານຊັ້ນ ປ.2 ຂອງກະຊວງສຶກສາທິການ ສະໄໝພະລາຊະອານາຈັກລາວ ເຊິ່ງພິມໃນປີ 1962 ພາຍຫຼັງທີ່ມີການປະຕິຮູບການສຶກສາ. ແລະໃນປຶ້ມແບບຮຽນຕ່າງໆໃນທຸກຊັ້ນຮຽນໃນຄາວນັ້ນ ທີ່ມີຄຳທີ່ກ່ຽວຂ້ອງກັບຄຳນີ້ ກໍສະກົດເປັນ 'ກິລາ'.
- ໂຮມບົດເພງລາວສຳລັບນັກຮຽນປະຖົມ ໂດຍກອງວິທະຍາການ ຂອງກະຊວງສຶກສາທິການ ປີ 1963 ກໍປາກົດມີເພງ "ກິລາ" ເຊິ່ງຂຶ້ນຕົ້ນວ່າ "ກິລາ ກິລາ ກິລາ ເປັນຢາປະເສີດ ສ້າງຄຸນດີເລີດ ທຳຄົນໃຫ້ເປັນຄົນດີ..."
- ວັດຈະນານຸກົມລາວ-ອັງກິດ ປີ 1972 ບັນທຶກທັງຄຳວ່າ ກິລາ ແລະ ກີລາ ທີ່ມີຄວາມໝາຍອັນດຽວກັນ.
- ວັດຈະນານຸກົມຝຣັ່ງ-ລາວ ໂດຍ ສົມຈິນ ປ. ງິນ ປີ 1970 ໄດ້ແປຄຳວ່າ sport ເປັນ ກິລາ, ກຣິທາ. (ກິລາ ແປງຈາກເຄົ້າປາລີ ແລະ ກຣິທາ ຈາກເຄົ້າສັນສະກິດ) ແລະ ໃນຄຳນຳຂອງວັດຈະນານຸກົມສະບັບດັ່ງກ່າວກໍໄດ້ພິມຕຳແໜ່ງແລະຊື່ຂອງຜູ້ຂຽນຄຳນຳວ່າ "ຮອງນາຍົກຣັຖມົນຕີ, ຣັຖມົນຕີກະຊວງສຶກສາທິການ, ສິລປາກອນ ແລະ ກິລາຍຸວະຊົນ, ລາຍເຊັນ ພຍາໄຊຍະເພັດຈຳພອນ (ເຫຼື້ອມ ອິນສີຊຽງໃໝ່)
- ແປຄຳຍາກ ຂອງສຳນັກພິມຈຳໜ່າຍລາວຮັກຊາດ ປີ 1974 ກໍໄດ້ບັນຈຸການສະກົດຄຳນີ້ວ່າ 'ກິລາ' ແລະໃຫ້ນິຍາມວ່າ "ນ. ການແຂ່ງຂັນ, ການຫຼິ້ນມ່ວນຊື່ນ".
- ວັດຈະນານຸກົມປາລີ-ລາວ ປີ 2004 ໂດຍມະຫາສີສະເຫວີຍ ສຸວັນນີ ໄດ້ບັນທຶກຄຳວ່າ ກິລາ ໃນພາສາປາລີ ໂດຍໃຫ້ໄປເບິ່ງຄຳວ່າ 'ກິລະນາ' ທີ່ແປເປັນພາສາລາວວ່າ "ການຫຼິ້ນກິລາ" ແລະ ຄຳວ່າ 'ກິລະນະກະ ແປເປັນລາວວ່າ "ຜູ້ຫຼິ້ນກິລາ".
- ປຶ້ມຄຳສັບເຄົ້າລາວ ທີ່ມາຈາກປາລີ-ສັນສະກິດ ໂດຍ ດຣ. ບຸນຖົ່ນ ສີນະວົງ ປີ 2011 ກໍບັນທຶກຄຳນີ້ເປັນ 'ກິລາ' ທີ່ໝາຍເຖິງ ການເຫຼັ້ນ, ການມ່ວນຊື່ນ.
- ວັດຈະນານຸກົມລາວ-ຝຣັ່ງ ຂອງສຸພາພອນ ແລະ ຄຳໃສ ສຸຂະວົງ ປີ 1985 ໄດ້ສະກົດຄຳນີ້ເປັນ 'ກິລາ' ໂດຍແປເປັນພາສາຝຣັ່ງວ່າ "Sport".
- ວັດຈະນານຸກົມຝຣັ່ງ-ລາວ ຮຽບຮຽງໂດຍ ແສງຈັນ ສຸຂະເສມ ປີ 2018 ກໍໄດ້ແປຄຳວ່າ sport ເປັນ 'ກິລາ'.
- ປຶ້ມໄວຍາກອນລາວປັດຈຸບັນ ພາກອັກຂະຫຼະວິທີ - ພາກວະຈີວິພາກ - ພາກວາກະຍະສຳພັນ ປີ 2000 ແລະ ໄວຍາກອນລາວປັດຈຸບັນ ພາກອັກຂະຫຼະວິທີ ປີ 2020 ກໍໄດ້ພິມຊື່ກະຊວງຢູ່ລຸ່ມໜ້າປົກວ່າ "ກະຊວງສຶກສາທິການ ແລະ ກິລາ"
- ບັນດາປຶ້ມແບບຮຽນທຸກວິຊາ ແຕ່ຊັ້ນອະນຸບານເຖິງມັດທະຍົມປາຍ ນັບແຕ່ປີ 1976 ເປັນຕົ້ນມາ ກໍລ້ວນແຕ່ພິມຊື່ກະຊວງໃສ່ລຸ່ມໜ້າປົກວ່າ "ກະຊວງສຶກສາທິການ ແລະ ກິລາ" ແລະບົດຮຽນທີ່ມີຄຳນີ້ກໍຈະສະກົດເປັນ 'ກິລາ'.
- ກົດໝາຍວ່າດ້ວຍກິລາ-ກາຍະກຳ ສະບັບປັບປຸງ ປີ 2012 ກໍສະກົດເປັນ 'ກິລາ'
- ຊື່ຂອງຄະນະວິຊາທີ່ຈັດຕັ້ງການຮຽນການສອນກ່ຽວຂ້ອງກັບພະລະສຶກສາ ເພິ່ນກໍໃສ່ຊື່ວ່າ 'ຄະນະວິທະຍາສາດການກິລາ'.
- ໜັງສືພິມຂອງກະຊວງສຶກສາທິການ ແລະ ກິລາ ກໍໃສ່ຊື່ໜັງສືພິມວ່າ "ໜັງສືພິມສຶກສາ-ກິລາລາຍວັນ".
- ຊື່ປ້າຍຂອງສະໜາມແຂ່ງຂັນຂອງຊາດ ເພິ່ນກໍໃສ່ຊື່ປ້າຍວ່າ "ສະໜາມກິລາແຫ່ງຊາດ" ຕັ້ງແຕ່ສະໄໝຊຸມປີ 60-70 ຈົນຮອດປັດຈຸບັນ.

ເຫດຜົນທີ່ພາໃຫ້ສະກົດເປັນ 'ກິລາ' ກໍຍ້ອນຄົນລາວເຮົາສ່ວນຫຼາຍເວລາອອກສຽງຄຳຈາກເຄົ້າປາລີ 'ກີລາ', ພະຍາງທຳອິດມັກພ້ຽນສຽງເປັນສຽງສັ້ນ ຈາກ 'ກີ' ກາຍເປັນ 'ກິ'. ດັ່ງນັ້ນຈາກຄຳເດີມ 'ກີລາ' ກໍເລີຍກາຍສຽງເປັນ 'ກິລາ'. ດັ່ງດຽວກັບຄຳອື່ນໆທີ່ມາຈາກພາສາປາລີ ເຮົາຈະບໍ່ຮັກສາສຽງເດີມ ມັກແປງເປັນສຽງທີ່ຄ່ອງລີ້ນຂອງຄົນລາວ ເຊັ່ນ ປີຕິ ເຮົາກໍມັກອອກສຽງເປັນ ປິຕິ, ວີຣະ ກໍແປງສຽງເປັນ ວິລະ, ນະຄະຣະ ກໍແປງເປັນ ນະຄອນ, ວະຊິຣະ ກໍແປງເປັນ ວິຊຽນ... ເມື່ອອອກສຽງພະຍາງທຳອິດເປັນສຽງສັ້ນ ກໍເລີຍໃຊ້ເປັນ 'ກິລາ' ແລະກໍຖືເປັນຄຳທາງການ ທີ່ໃຊ້ຢູ່ໃນປຶ້ມແບບຮຽນ, ໃນກົດໝາຍ ແລະເປັນຊື່ຂອງກະຊວງ.

ສະຫຼຸບລວມແລ້ວ, ທັງ ກິລາ ແລະ ກີລາ ກໍຖືກທັງສອງ. ຕ່າງແຕ່ ກີລາ ຈະໃຊ້ໃນກໍລະນີເປັນຄຳປາລີ, ສ່ວນ ກິລາ ແມ່ນໃຊ້ເປັນຄຳລາວ ເຊິ່ງກະຊວງສຶກສາທິການນັບແຕ່ຊຸມປີ 60 ສະຕະວັດທີແລ້ວ ມາຮອດປັດຈຸບັນແມ່ນໃຊ້ການສະກົດແບບນີ້ຢ່າງເປັນທາງການ.

ທ່ານຜູ້ອ່ານເດ, ເຄີຍຮຽນ ແລະເຄີຍເວົ້າຄຳທີ່ສະກົດແບບໃດ ລະຫວ່າງ 'ກິລາ' ແລະ 'ກີລາ'?




# ອາຊຽນ ແລະ ອີຢູ ໃຫ້ຄຳໝັ້ນສັນຍາ ເພີ່ມທະວີການຮ່ວມມືສອງຝ່າຍ



ໃນວັນທີ 26 ກຸມພາ 2023 ກອງປະຊຸມຄັ້ງທີ 30 ຂອງຄະນະກຳມະການຮ່ວມມືສອງຝ່າຍສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ (ອາຊຽນ)-ສະຫະພາບເອີລົບ (ອີຢູ) ຈັດຂຶ້ນຢູ່ນະຄອນຫຼວງຈາກາຕາ ປະເທດອິນໂດເນເຊຍ ໄດ້ອັດລົງ, ສອງຝ່າຍໄດ້ອອກຖະແຫຼງການຮ່ວມຢັ້ງຢືນຄຳໝັ້ນສັນຍາເພີ່ມທະວີການຮ່ວມມືລະຫວ່າງອາຊຽນ-ອີຢູ ຄືນໃໝ່ ແລະ ຮັກສາບົດບາດໃຈກາງຂອງອາຊຽນ ໂດຍອີງໃສ່ບັນດາຫຼັກການພື້ນຖານທີ່ຄ້າຍຄືກັນໃນການສຳຜັດມະຫາສະໝຸດອິນເດຍ-ປາຊີຟິກຂອງແຕ່ລະຝ່າຍ.

ສອງຝ່າຍເຫັນດີເປັນເອກະພາບຊອກຮູ້ຄວາມສາມາດບົ່ມຊ້ອນໃນການຮ່ວມມືໃນ 4 ຂົງເຂດບຸລິມະສິດຂອງວິໄສທັດອາຊຽນ ກ່ຽວກັບມະຫາສະໝຸດອິນເດຍ-ປາຊີຟິກ, ເໝາະສົມກັບບັນດາຫຼັກການສົນທິສັນຍາໄມຕີຈິດມິດຕະພາບ ແລະ ການຮ່ວມມືຢູ່ອາຊີຕາເວັນອອກສ່ຽງໃຕ້ (TAC), ກົດບັດອາຊຽນ ແລະ AOIP. ສອງຝ່າຍຮັບຮູ້ເລື່ອງເລີ່ມປະຕິບັດຂໍ້ລິເລີ່ມຂອງກຸ່ມເອີຣົບ ກ່ຽວກັບການເຊື່ອມຕໍ່ແບບຍືນຍົງ ແລະ ຜັນຂະຫຍາຍຂໍ້ລິເລີ່ມສີຂຽວຂອງກຸ່ມເອີຣົບ ແນໃສ່ເພີ່ມທະວີການຮ່ວມມືອາຊຽນ-ອີຢູ ດ້ວຍບັນດາໂຄງການລະອຽດລະດັບພາກພື້ນ ແລະ ລະດັບຊາດ ພ້ອມທັງຊົມເຊີຍບ້ວງເງິນປະກອບສ່ວນທີ່ຄາດວ່າແມ່ນປະມານ 10 ຕື້ເອີໂຣຂອງອີຢູ ໃຫ້ແກ່ການຜັນຂະຫຍາຍຂໍ້ລິເລີ່ມ "ປະຕູຂອງທົ່ວໂລກ" ຂອງອີຢູ ໃນພາກພື້ນອາຊຽນ. ສອງຝ່າຍກໍຢັ້ງຢືນຄວາມສຳຄັນ ແລະ ຄຳໝັ້ນສັນຍາສຳລັບໂຄງການດຳເນີນງານ 2030 ແລະ ພັດທະນາແບບຍືນຍົງ, ສົນທິສັນຍາແມ່ ສປຊ ກ່ຽວກັບການປ່ຽນແປງຂອງດິນຟ້າອາກາດ (UNFCCC), ຂໍ້ຕົກລົງປາຣີ (COP21), ສົນທິສັນຍາກ່ຽວກັບຊີວະນາໆພັນ (CBD) ແລະ ຂອບຊີວະນາໆພັນທົ່ວໂລກ ໂກນມິນ-Montreal.

**ຂ່າວ: ວິທະຍຸກະຈາຍສຽງຫວຽດນາມ**

# ສີລັງກາ ຮັບສິນເຊື່ອຮອບໃໝ່ຈາກ IMF ຟື້ນຟູເສດຖະກິດ



ອີງຕາມການລາຍງານໃຫ້ຮູ້ວ່າ: ຈາກຄະນະບໍລິຫານຂອງກອງທຶນການເງິນສາກົນ (IMF) ມີມະຕິໃນວັນທີ 20 ມີນາ ອະນຸມັດສິນເຊື່ອງວດໃໝ່ເປັນວົງເງິນເກືອບ 3.000 ລ້ານໂດລາສະຫະລັດ ໃຫ້ສີລັງກາ ເພື່ອຮັກສາສະພາບຄ່ອງ ແລະ ສະຖຽນລະພາບທາງເສດຖະກິດໃຫ້ປະເທດ ເຊິ່ງອັດຕາເງິນເຟີ້ຍັງຢູ່ໃນລະດັບສູງກວ່າ 50% ນັ້ນ.

IMF ອອກຖະແຫຼງການເພີ່ມກ່ຽວກັບສະຖານະການຂອງສີລັງກາວ່າ: ທະນາຄານກາງຂອງສີລັງກາຈະໄດ້ຮັບເງິນຊ່ວຍເຫຼືອຢ່າງໜ້ອຍ 330 ລ້ານໂດລາສະຫະລັດ ພາຍໃນ 48 ຊົ່ວໂມງ ນັບຈາກວັນທີ່ໄດ້ຮັບການອະນຸມັດ ຕໍ່ຈາກນັ້ນການເບີກຈ່າຍເພື່ອຮັບເງິນຊ່ວຍເຫຼືອຈະຂຶ້ນຢູ່ກັບການປະເມີນສະຖານະການທຸກ 6 ເດືອນ.

ຂະນະດຽວກັນ, IMF ຄາດຫວັງວ່າ: ການອະນຸມັດສິນເຊື່ອໃຫ້ສີລັງກາໃນຄັ້ງນີ້ຈະເປັນຕົວເລັ່ງ ແລະ ສ້າງຄວາມເຊື່ອໝັ້ນໃຫ້ອົງກອນແຫ່ງອື່ນ ໃນການມອບການສະໜັບສະໜູນທາງເສດຖະກິດໃຫ້ສີລັງກາ ໂດຍ IMF ຄາດຄະເນວ່າ: ທະນາຄານໂລກ (World Bank) ແລະ ທະນາຄານພັດທະນາອາຊີ (ADB) ຈະອະນຸມັດສິນເຊື່ອງວດໃໝ່ໃຫ້ສີລັງກາ ລວມປະມານ 3.750 ລ້ານໂດລາສະຫະລັດ.

ສ່ວນຈີນ, ອິນເດຍ ແລະ ຍີ່ປຸ່ນ ໃນຖານະ "ເຈົ້າໜີ້ລະດັບລັດຕໍ່ລັດ" ຕ່າງຢືນຢັນມອບການສະໜັບສະໜູນທາງການເງິນເພີ່ມໃຫ້ສີລັງກາເຊັ່ນກັນ.

ການອະນຸມັດສິນເຊື່ອຂອງ IMF ໃຫ້ສີລັງກາເກີດຂຶ້ນພາຍໃຕ້ເງື່ອນໄຂຫຼາຍປະການ ເຊິ່ງລວມທັງສີລັງກາຕ້ອງແກ້ໄຂບັນຫາໜີ້ ໃນໄລຍະຍາວ ດ້ວຍການປັບໂຄງສ້າງໜີ້ນຳບັນດາເຈົ້າໜີ້ອື່ນໆ ເພື່ອສ້າງຄວາມເຊື່ອໝັ້ນໃຫ້ທຸກຝ່າຍທີ່ກ່ຽວຂ້ອງໃຫ້ມີຕໍ່ "ຄວາມຍືນຍົງຂອງໜີ້" ຂອງສີລັງກາ ໝາຍຄວາມເຖິງຄວາມສາມາດໃນການຊຳລະຄືນພາຍໃນກຳນົດ ແລະ ການຫຼຸດຊ່ອງວ່າງທາງການເງິນເພື່ອໃຫ້ການບໍລິຫານຄວາມສ່ຽງເປັນໄປຢ່າງມີປະສິດທິພາບ.




# ແກ້ບັນຫາດ້ວຍມາດຕະການປ້ອງກັນໄວ້ລ່ວງໜ້າ

ພົບກັນໃນຄໍລຳ "ເບິ່ງໄວ້ໄດ້ບົດຮຽນ" ປະຈຳສະບັບນີ້ມີເລື່ອງເຕືອນສະຕິກ່ຽວກັບການຄ້າມະນຸດທີ່ມາແອບແຝງມາໃນຮູບແບບຕ່າງໆທີ່ເລິກແລບແນບນຽນຈົນເບິ່ງບໍ່ອອກໄປພ້ອມໆກັນບາງບົດຮຽນຂອງຕ່າງປະເທດໃນການປ້ອງກັນໄວ້ແຕ່ຫົວທີເພື່ອບໍ່ໃຫ້ໄພໃກ້ຕົວດັ່ງກ່າວເກີດຂຶ້ນ. ຢູ່ປະເທດໄທ, ເມື່ອເດືອນ 7 ປີຜ່ານມາ, ທາງການຂອງປະເທດນີ້ ໄດ້ເລີ່ມສ້າງຕັ້ງໂທລະສັບສາຍດ່ວນໝາຍເລກ +66 9913013000 ເພື່ອຊ່ວຍເຫຼືອຄົນໄທໃນຕ່າງປະເທດທີ່ຕ້ອງການຄວາມຊ່ວຍເຫຼືອດ່ວນເວລາປະເຊີນກັບບັນຫາທີ່ກົ້ນບໍ່ເຂົ້າ-ຄາຍບໍ່ອອກ ຫຼືຢູ່ໃນສະພາບຈົນຕາແຈ. ໂທລະສັບສາຍດ່ວນໝາຍເລກນີ້ໂທໄດ້ທົ່ວໂລກໂດຍບໍ່ເສຍຄ່າເພື່ອແຈ້ງໃຫ້ທາງການໄທຊາບກ່ຽວກັບຊາຕາກຳທີ່ພົນລະເມືອງໄທພວມປະເຊີນ ໂດຍສະເພາະແມ່ນໃນກໍລະນີຖືກຕົ້ມຕຸ໋ນ, ຖືກຕົວະຍົວະຫອກລວງໃຫ້ຂາຍໂຕ (ເປັນໂສເພນີ) ຫຼືຖືກຂູດຮີດແຮງງານ ຂ່າວບອກວ່າເລກໂທສາຍດ່ວນນີ້ໄດ້ຮັບການເຜີຍແຜ່ໃຫ້ຄົນໃນສັງຄົມປະເທດຕ່າງໆຮັບຊາບ ເພື່ອສາມາດນຳໃຊ້ແຈ້ງຂ່າວເມື່ອພົບເຫັນຄົນໄທຖືກຫຼອກລວງໃຫ້ຕົກເປັນເຫຍື່ອຂອງການຄ້າມະນຸດໃນທຸກຮູບແບບ. ວ່າກັນວ່າລະບົບໂທລະສັບສາຍດ່ວນນີ້ແມ່ນຜົນງານຈາກຫົວຄິດປະດິດສ້າງຮ່ວມກັນລະຫວ່າງກະຊວງພັດທະນາສັງຄົມ ແລະ ຄວາມໝັ້ນຄົງຂອງມະນຸດກັບຫ້ອງການວິທະຍຸກະຈາຍສຽງ ແລະ ໂທລະຄົມມະນາຄົມແຫ່ງຊາດໄທ. ໃນພິທີເຊັນບົດບັນທຶກຄວາມເຂົ້າໃຈເພື່ອເປີດນຳໃຊ້ລະບົບໂທລະສັບສາຍດ່ວນຄັ້ງນີ້, ທ່ານ ປູະວິດວົງສຸວັນ ຮອງນາຍົກລັດຖະມົນຕີໄທ ໄດ້ມີຄຳເຫັນວ່າ ລະບົບໃຫ້ບໍລິການໂທລະສັບສາຍດ່ວນນີ້ ມີເປົ້າໝາຍຕົ້ນຕໍ ເພື່ອຊ່ວຍແມ່ຍິງໄທທີ່ຖືກຫຼອກລວງໄປຄ້າປະເວນີຢູ່ຕ່າງແດນ. ຈຸດພິເສດທີ່ໂດດເດັ່ນຂອງລະບົບນີ້ແມ່ນມັນສາມາດບັນທຶກແບບອັດຕະໂນມັດຢ່າງລະອຽດທັງສຽງ ແລະ ເລກໂທລະສັບຂອງຜູ້ໂທ. ໃນໄລຍະດຽວກັນການເປີດບໍລິການລະບົບໂທລະສັບສາຍດ່ວນຢູ່ໄທນັ້ນ, ທາງກະຊວງການຕ່າງປະເທດອິນໂດເນເຊຍ ກໍໄດ້ສ້າງລະບົບວ໋ອດແອບ ເພື່ອຊ່ວຍເຫຼືອພົນລະເມືອງຂອງຕົນທີ່ອາໄສ ຫຼື ເດີນທາງໄປທ່ອງທ່ຽວຢູ່ຕ່າງປະເທດ ແລະ ມີຄວາມຕ້ອງການຂໍຄວາມຊ່ວຍເຫຼືອ ເມື່ອປະເຊີນກັບບັນຫາຄັບຂັນ. ລະບົບແອັບນີ້ມີໜ້າທີ່ສະໜອງຂໍ້ມູນອັນຈຳເປັນກ່ຽວກັບການແກ້ໄຂບັນຫາສະເພາະໜ້າ ເຊັ່ນ ວິທີຕິດຕໍ່ສະຖານທູດ ຫຼື ສະຖານກົງສູນທີ່ຢູ່ໃກ້ທີ່ສຸດ, ຄວນຕິດຕໍ່ພາກສ່ວນໃດຂອງປະເທດເຈົ້າພາບ, ນອກນັ້ນລະບົບແອັບນີ້ຍັງຊ່ວຍເລື່ອງການປະພຶດໂຕໃຫ້ເໝາະສົມເວລາໄປແຕ່ລະປະເທດ ຄືອັນໃດເຮັດໄດ້ອັນໃດຫ້າມເຮັດ ດັ່ງນີ້ເປັນຕົ້ນ. ລະບົບແອັບດັ່ງກ່າວນັ້ນມີກົນໄກເຊື່ອມກັບລະບົບເຊີບເວີຂອງກະຊວງການຕ່າງປະເທດໂດຍກົງ. ຢູ່ປະເທດຫວຽດນາມນັ້ນ, ມາດຕະການປ້ອງກັນໄພຈາກການຄ້າມະນຸດໄດ້ເຮັດຢ່າງເປັນລະບົບໂດຍມີພື້ນຖານດ້ານກົດໝາຍຄ້ຳປະກັນຄັກແນ່ ແລະ ມີກົນໄກປະສານງານກັບບັນດາປະເທດເປົ້າໝາຍຕ່າງໆ. ການປົກປ້ອງແມ່ຍິງບໍ່ໃຫ້ຕົກເປັນເຫຍື່ອຂອງການຄ້າມະນຸດນັ້ນຖືເປັນໜ້າທີ່ບູລິມະສິດ ໃນການຕ້ານ ແລະ ສະກັດກັ້ນອາຊະຍາກຳປະເພດນີ້ ເຫດຜົນກໍເພາະວ່າໃນຊຸມປີຫຼັງໆມານີ້ ການແຕ່ງດອງລະຫວ່າງຊາຍຕ່າງປະເທດກັບແມ່ຍິງຫວຽດນາມນັ້ນ ມີທ່າອ່ຽງເພີ່ມຂຶ້ນຕາມຍຸກສະໄໝເປີດກວ້າງການພົວພັນຮ່ວມມືໂດຍສະເພາະແມ່ນທາງດ້ານເສດຖະກິດ. ບັນດາຜູ້ຊາຍທີ່ພາກັນສະຫຼະຄວາມໂສດໄປຂໍເປັນເຂີຍຫວຽດນາມນັ້ນ ຫຼາຍກວ່າໝູ່ແມ່ນພົນລະເມືອງ ສ.ເກົາຫຼີ ແລະ ຈາກເກາະໄຕ້ຫວັນຂອງຈີນ, ສະຖິຕິເມື່ອປະມານ 7 ປີຜ່ານມາ ບອກວ່າປະມານ 80% ຂອງຄົນຫວຽດນາມທີ່ມີຄູ່ຄອງຄົນຕ່າງປະເທດນັ້ນແມ່ນເພດຍິງ. ສ່ວນຈຳນວນຜູ້ຊາຍຫວຽດນາມທີ່ແຕ່ງດອງກັບແມ່ຍິງຕ່າງປະເທດນັ້ນມີປະມານ 20%, ນອກຈາກການແຕ່ງດອງກັບພົນລະເມືອງ ສ.ເກົາຫຼີ ແລະ ຈາກເກາະໄຕ້ຫວັນແລ້ວ, ການສ້າງຄອບຄົວກັບຄົນຫວຽດນາມທີ່ອາໄສຢູ່ຕ່າງປະເທດ ກໍເປັນກະແສທີ່ມາແຮງພໍສົມຄວນ. ຖ້ານັບແຕ່ປີ 2015 ຮອດປັດຈຸບັນພົນລະເມືອງຫວຽດນາມນີ້ ແຕ່ງດອງກັບຊາວຕ່າງປະເທດ ກໍຄືຄົນຫວຽດນາມພົ້ນທະເລນັ້ນ ມີຈຳນວນຫຼາຍກວ່າ 50.000 ຄົນແລ້ວ. ແນວໃດກໍດີການແຕ່ງດອງກັບຄົນຕ່າງປະເທດນັ້ນ ກໍມີທັງສົມຫວັງ ແລະ ຜິດຫວັງ, ຮ້າຍແຮງໄປກວ່ານັ້ນ ຍັງມີແມ່ຍິງຫວຽດນາມ ຈຳນວນບໍ່ໜ້ອຍທີ່ຕົກເປັນເຫຍື່ອການຄ້າມະນຸດ, ການໃຊ້ຄວາມຮຸນແຮງພາຍໃນຄອບຄົວ ເຖິງຂັ້ນແຕກຫັກ. ເພື່ອຫາທາງປ້ອງກັນໄວ້ລ່ວງໜ້າບໍ່ໃຫ້ເຫດຮ້າຍເກີດຂຶ້ນກັບແມ່ຍິງຫວຽດນາມ, ທີ່ແຕ່ງດອງກັບຄົນຕ່າງປະເທດ, ທາງການຫວຽດນາມໄດ້ເອົາໃຈໃສ່ມາດຕະການເຂັ້ມງວດທາງກົດໝາຍເພື່ອຄຸ້ມຄອງລະບຽບການແຕ່ງດອງ, ຍົກລະດັບການສຶກສາ ແລະ ສ້າງວຽກເຮັດງານທຳໃຫ້ແມ່ຍິງໃນເຂດຊົນນະບົດຈັດການຝຶກອົບຮົມໃຫ້ແມ່ຍິງຮັບຮູ້ ແລະ ເຂົ້າໃຈແຈ້ງກ່ຽວກັບບັນຫາການແຕ່ງດອງກັບຄົນຕ່າງປະເທດ, ຈັດຕັ້ງໜ່ວຍງານຊ່ວຍເຫຼືອແມ່ຍິງທີ່ຕົກເປັນເຫຍື່ອການຄ້າມະນຸດ ຫຼື ປະສົບເຄາະຮ້າຍຈາກການແຕ່ງດອງທີ່ບໍ່ສົມຫວັງແລ້ວຕ້ອງໄດ້ກັບຄືນປະເທດ.




## ປະກັນໄພການຄົວກິນ

*#ບ່າວກະບື*

ເມຍ: "ຫາກນ້ອງໄລ່ແມ່ຄົວອອກ ແລ້ວແຕ່ງກິນໃຫ້ອ້າຍກິນເອງເປັນເວລາ 1 ເດືອນ ອ້າຍຊິຈ່າຍຫຍັງໃຫ້ນ້ອງແດ່?"

ຜົວ: "ອ້າຍບໍ່ເຫັນຈຳເປັນຈ່າຍຫຍັງໃຫ້ນ້ອງດອກ... ເພາະນ້ອງຈະໄດ້ຮັບເງິນປະກັນຊີວິດຂອງອ້າຍທັງໝົດບາດດຽວເລີຍ!"

## COOKING INSURANCE

*#BAOKBU*

Wife: "If I dismiss the cook and make the food for you myself for a month what will you pay me?"

Husband: "I don't need to pay you. You'll get my entire insurance amount".






ປ້າຍຫ້າມມີໄວ້ຫ້າມ ບໍ່ໄດ້ມີໄວ້ແຫກ

• ໂດຍ : ພູຜາ

ທະນາຄານພັດທະນາລາວ
LDB Bank

ຜູ້ຊີ້ນຳ :
ທ່ານ ສິງຄຳ ວົງພະຈັນ

ຄະນະຊ່ຽວຊານທີ່ປຶກສາ :
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

ຄະນະບັນນາທິການ :
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

ກອງບັນນາທິການ :
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ຫອມສະນິດ
ນາງ ປາກາລັກ ພົມມີໄຊ

ອອກແບບ - ຈັດໜ້າ :
ທ່ານ ຄຳຫວັນ ດາລາວົງ
ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ